# ກ້ອງຊ່ອງເບິ່ງຍີ່ປຸ່ນ

ແປຈາກປຶ້ມ ຕະເຕໂຢໂກ (ພາສາຍີ່ປຸ່ນ)

## 日本の社会Ⅰ　ສັງຄົມຂອງຍີ່ປຸ່ນ

１．統治のしくみ　ກົນໄກການປົກຄອງ
- １）天皇制　ລະບົບຈັກກະພັດ
- ２）日本国憲法の特色　ຈຸດເດັ່ນຂອງລັດຖະທຳມະນູນຂອງຍີ່ປຸ່ນ

２．天皇　ຈັກກະພັດ
- １）万世一系、１２５代目の当主　ອົງທີ່ 125 ຕະກຸນດຽວໃນລາດຊະວົງ
- ２）天皇の文化遺産　ຈັກກະພັດກັບບໍລະດົກທາງວັດທະນະທຳ

３．戦後政治の流れ　ການເມືອງຫຼັງສົງຄາມໂລກ
- １）GHQ の介入と吉田内閣誕生
  ບົດບາດຂອງ GHQ ແລະການຕັ້ງລັດຖະບານທ່ານ ໂຢຊິດະ

４．内閣　ຄະນະລັດຖະມົນຕີ
- １）総理大臣選出と組閣　ການຂັດເລືອກນາຍຍົກແລະການຈັດຕັ້ງຄະນະລັດຖະບານ
- ２）内閣の運営　ການບໍລິຫານງານຂອງຄະນະລັດຖະມົນຕີ

５．選挙　ການເລືອກຕັ້ງ
- １）選挙制度　ລະບົບການເລືອກຕັ້ງ
- ２）議員の任期　ວາລະຂອງສະມາຊິກສະພາ

６．派閥　ກຸ້ມຕ່າງໆໃນພັກການເມືອງ

７．官僚　ລັດຖະກອນແກ່ນສານ
- １）官僚の歴史　ປະວັດຂອງລະບົບລັດຖະກອນແກ່ນສານ
- ２）官僚制度の功績　ຄວາມສຳເລດຂອງລະບົບລັດຖະກອນແກ່ນສານ

８．日本の国会　ສະພາແຫ່ງຊາດຂອງຍີ່ປຸ່ນ
- １）国会の役割　ພາລະບົດບາດຂອງສະພາ
- ２）国会の構成　ອົງປະກອບຂອງສະພາ
- ３）活動期間　ໄລຍະຂອງການປະຕິບັດງານ
- ４）国会の権限　ສິດອຳນາດແລະຄວາມສາມາດ
- ５）議案の審議過程　ຂັ້ນຕອນຂອງການພິຈາລະນາຮ່າງການປະຊຸມ

９．裁判　ສານ
- １）司法の組織　ອົງປະກອບຂອງສານ
- ２）裁判所、検察庁、弁護士協会
  ຫ້ອງວ່າການສານ ,ທະບວງໄອຍະການ,ສະມາຄົມທະນາຍຄວາມ

１０．税制　ລະບົບພາສີ
- １）消費税の投入　ການເລີ່ມຈັດເກັບພາສີຜູ້ບໍລິໂພກ ( ພາສີຊົມໃຊ້ )

| | |
|---|---|
| １１．外交 | ນະໂຍບາຍຕ່າງປະເທດ |
| １２．防衛 | ການປ້ອງກັນປະເທດ |
| １３．経済協力 | ຄວາມຮ່ວມມືທາງເສດຖະກິດ |
| １４．戦後日本経済復興 | ການຟື້ນຟູເສດຖະກິດຂອງຍີ່ປຸ່ນພາຍຫຼັງສົງຄາມໂລກ |
| １５．財閥解体 | ການປະຕິຮູບກຸ່ມນາຍທຶນ |
| １６．農地改革 | ການປະຕິຮູບດິນກະສິກຳ |
| １７．農協協同組合 | ການກໍ່ຕັ້ງສະຫະກອນຊາວນາ |
| １８．産業構造の変遷 | ການປ່ຽນແປງຂອງໂຄງສ້າງທາງການຜະລິດ |
| １９．日本の製造技術 | ເຕັກໂນໂລຍີການຜະລິດຂອງຍີ່ປຸ່ນ |
| ２０．日本のエネルギー供給 | ແຫຼງພະລັງງານຂອງຍີ່ປຸ່ນ |
| ２１．ビジネスマンの一日 | ຊີວິດປະຈຳວັນຂອງນັກທຸລະກິດຍີ່ປຸ່ນ |
| ２２．ビジネスマンの付き合い | ການສັງສັນຂອງນັກທຸລະກິດ |
| ２３．日本的商談 | ການເຈລະຈາທຸລະກິດແບບຍີ່ປຸ່ນ |
| ２４．雇用関係の特徴 | ຫຼັກສະນະພິເສດຂອງການຈ້າງງານແບບຍີ່ປຸ່ນ |

# ພາກ I　ສັງຄົມຂອງຍີ່ປຸ່ນ　日本(にほん)の社会(しゃかい)

## 1．ກົນໄກການປົກຄອງ　統治(とうち)のしくみ

### 1）ລະບົບຈັກກະພັດ ( Tennou sei ) 天皇制

ສະຖາບັນຈັກກະພັດ ຫຼື ທີ່ຮູ້ຈັກກັນໃນພາສາຍີ່ປຸ່ນວ່າ ເທນໂນ ( Tennou ) ເປັນອົງປະກອບອັນສຳຄັນທີ່ຂາດບໍ່ໄດ້ສຳຫຼັບກົນໄກການປົກຄອງຂອງປະເທດຍີ່ປຸ່ນ ຕັ້ງແຕ່ຍີ່ປຸ່ນໄດ້ກໍ່ຕັ້ງເປັນປະເທດຂຶ້ນມາ ຈັກກະພັດກໍ່ດຳລົງຕຳແໜ່ງເປັນ " ສັນຍາລັກ " ຂອງປະເທດມາໂດຍຕະລອດແຕ່ວ່ານອກຈາກໃນສະໄໝຍຸກບູຮານແລ້ວ ຈັກກະພັດຈະບໍ່ໄດ້ມີສ່ວນຮ່ວມໃນການບໍລິຫານປະເທດໂດຍກົງໃນຄວາມເປັນຈິງແລ້ວຜູ້ທີ່ບໍລິຫານປະເທດກໍ່ຄືຊຸນນາງແລະບະກຸຟູ ( Bakufu )ລັດຖະບານທະຫານທີ່ຈັດຕັ້ງຂຶ້ນໂດຍຊົນຊັ້ນນັກລົບ ເມື່ອເຂົ້າສູ່ສະໄໝແລະມີການປະກາດໃຊ້ລັດຖະທຳມະນູນ ເມຈິ ຈັກກະພັດເປັນຜູ້ປົກຄອງປະເທດຕາມລັດທະທຳມະນູນ ແຕ່ໃນທາງປະຕິບັດລັດຖະບານເປັນຜູ້ທຳໜ້າທີ່ປົກຄອງປະເທດຕາມລະບົບ ຄະນະລັດຖະມົນຕີໂດຍຄວາມໄວ້ວາງໃຈຈາກລັດຖະສະພາ. ເມື່ອຍີ່ປຸ່ນແພ້ສົງຄາມໂລກຄັ້ງທີ່ສອງ ໄດ້ມີການແກ້ໄຂລັດຖະທຳມະນູນ ພາຍໄຕ້ການນຳຂອງພົນເອກ ແມກອາເທີ ແມ່ທັບຂອງອາເມລິກາ ແລະ ມີການປະກາດໃຊ້ລັດຖະທຳມະນູນໃໝ່ເມື່ອວັນທີ່ 3 ເດືອນ ພຶດສະພາ 1947 ໃນລັດຖະທຳມະນູນສະບັບໃໝ່ນີ້ ອຳນາດອາທິປະໄຕໄດ້ປ່ຽນຈາກ " ຈັກກະພັດ " ໄປເປັນຂອງ ປະຊາຊົນໃນມາດຕາທີ່ 1 ຂອງລັດຖະທຳມະນູນບັນຍັດໄວ້ວ່າ ຈັກກະພັດຊົງເປັນ " ສັນຍາລັກຂອງປະເທດຍີ່ປຸ່ນແລະເປັນສັນຍາລັກແຫ່ງຄວາມເປັນອັນໜຶ່ງອັນດຽວກັນຂອງປະຊາຊົນຊາວຍີ່ປຸ່ນ ໃນມາດຕາທີ່ 6 ບັນຍັດໃວ້ວ່າ ຈັກກະພັດມີໜ້າທີ່ແຕ່ງຕັ້ງນາຍຍົກລັດຖະມົນຕີແລະປະທານສານສູງສຸດແລະມາດຕາ 7 ໄດ້ລະບຸການປະຕິບັດລາດຊະການແຜ່ນດິນຂອງຈັກກະພັດໄວ້ 10 ຂໍ້ດັ່ງຕໍ່ລົງໄປນີ້:

1. ການແກ້ໄຂລັດຖະທຳມະນູນແລະປະກາດໃຊ້ກົດໝາຍສົນທິສັນຍາ
2. ການຮຽກປະຊຸມລັດຖະສະພາ
3. ການຍຸບສະພາຜູ້ແທນປະຊາຊົນ ( ສະພາຕ່ຳ )
4. ການປະກາດເລືອກຕັ້ງ
5. ການແຕ່ງຕັ້ງຖອດຖອນແລະລົງນາມຮັບຮອງເອົາລັດຖະມົນຕີ
6. ການນິລະໂທດ
7. ການປູນບຳເໜດລາງວັນ
8. ການລົງນາມຮັບຮອງເອົາສົນທິສັນຍາເອກະສານທາງການທູດ
9. ການຕ້ອນຮັບເອກອັກຄະລັດຖະທູດ
10. ການປະກອບພະລະລາຊາພິທີ

ທຸກຢ່າງຈະເຮັດຕາມຄຳແນະນຳແລະຄວາມເຫັນຊອບຂອງຄະນະລັດຖະມົນຕີ ໃນຄວາມເປັນຈິງຈັກກະພັດບໍ່ມີອຳນາດໃດໆ ສະລຸບໄດ້ວ່າຍີ່ປຸ່ນໄດ້ກັບຄືນໄປສູ່ລະບົບຈັກກະພັດແບບດັ້ງເດີມ.

ການມີຂໍ້ອຳນາດ 2 ຂໍ້ຄື “ອຳນາດໃນການປົກຄອງປະເທດ” (ຈັກກະພັດ) “ ອຳນາດບໍລິຫານ “ (ລັດຖະບານ)ເຊັ່ນນີ້ເປັນລັກສະນະສະເພາະທີ່ສຳຄັນຂອງກົນໄກການການປົກຄອງແບບຍີ່ປຸ່ນ.

### 2） ຈຸດເດັ່ນຂອງລັດຖະທຳມະນູນຂອງຍີ່ປຸ່ນ　日本国憲法(にほんこくけんぽう)の特色(とくしょく)

ຂໍ້ແຕກຕ່າງລະຫວ່າງລັດຖະທຳມະນູນສະບັບໃໝ່ແລະເກົ່ານອກຈາກອຳນາດອາທິປະໄຕຈະປ່ຽນຈາກຈັກກະພັດໄປເປັນຂອງປະຊາຊົນແລ້ວໃນລັດຖະທຳມະນູນຍັງເນັ້ນເຖິງການເຄົາລົບສິດຖິສ່ວນບຸກຄົນແລະປະກາດເລີກເຮັດສົງຄາມ ( ໝວດທີ່ 2 ມາດຕາທີ່ 9 ) ນອກຈາກນີ້ຍັງມີການແຍກອຳນາດບໍລິຫານ ນິຕິບັນຍັດແລະຕຸລາການອອກຈາກກັນຢ່າງແຈມແຈ້ງ ລັດຖະບານເປັນສະຖາບັນນິຕິບັນຍັດ (ອອກກົດໝາຍ) ໃຊ້ລະບົບ 2 ສະພາຄື : ສະພາຜູ້ແທນປະຊາຊົນ (ສະພາຕ່ຳ) ຊຶ່ງມີສະມາຊິກ 480 ຄົນ ແລະ ວຸດຖິສະພາ (ສະພາສູງ) ມີສະມາຊິກ 242 ຄົນ ທີ່ມາຈາກການເລືອກຕັ້ງຂອງປະຊາຊົນ. ການບໍລິຫານໃຊ້ລະບົບ “ ຄະນະລັດຖະມົນຕີໂດຍຄວາມໄວ້ວາງໃຈຈາກລັດຖະສະພາ ຊຶ່ງຈະມີການສະເນີຊື່ນາຍຍົກລັດຖະມົນຕີຈາກສະມາຊິກສະພາ ນາຍຍົກຈະແຕ່ງຕັ້ງລັດຖະມົນຕີຂຶ້ນມາບໍລິຫານງານແຕ່ລະກະຊວງແລະທະບວງ, ໃນຈຳນວນຄະນະລັດຖະມົນຕີຫຼາຍກ່ວາເຄິ່ງຈະຕ້ອງເປັນສະມາຊິກສະພາ. ສ່ວນສານຊຶ່ງເປັນສະຖາບັນຕຸລາການນັ້ນມີ 3 ຊັ້ນ ຄື ສານທ່ອງຖິ່ນ (ສານຕັດສິນຄະດີງ່າຍ) ສານອຸທອນແລະສານສູງສຸດ.
ການມີສ່ວນສ່ວນຮ່ວມທາງທາງດ້ານການເມືອງຂອງປະຊາຊົນຈະເຮັດໄດ້ໂດຍການລົງຈະແນນສຽງເລືອກຕັ້ງສະມາຊິກສະພາ ການກວດສອບຄວາມເໝາະສົມຂອງຜູ້ພິພາກສາສານສູງສຸດ (ໂດຍລົງຂະແນນວ່າຮັບເອົາຫຼືບໍ່) ການເລືອກຕັ້ງແລະຖອດຖອນຜູ້ບໍລິຫານທ່ອງຖິ່ນ (ເຈົ້າແຂວງ / ເຈົ້າເມືອງ)ແລະສະມາຊິກສະພາການປົກຄອງທ່ອງຖິ່ນ ການລົງມັດຕິໃນການເຮັດປະຊາພິຈານໃນການແກ້ໄຂລັດຖະທຳມະນູນ ກ່ອນຈະແກ້ໄຂລັດຖະທຳມະນູນໄດ້ນັ້ນຕ້ອງໄດ້ຮັບສຽງສະນັບສະໜຸນເກີນ 2 ໃນ 3 ຂອງສະມະຊິກສະພາຜູ້ແທນປະຊາຊົນແລະວຸດຖິສະພາແລະເກີນເຄິ່ງໜຶ່ງຂອງປະຊາຊົນ

## 2．ຈັກກະພັດ　Tenno　天皇(てんのう)

### 1） ອົງທີ່ 125 ຕະກຸນດຽວໃນລາດຊະວົງ　万世一系、１２５代目の当主

ຈັກກະພັດອົງທີ່ 125 ໃນລາດຊະວົງທີ່ສືບທອດມາໂດຍຕະລອດ ຖ້າອີງຕາມບົດບັນທຶກທາງປະວັດສາດທີ່ເກົ່າແກ່ທີ່ສຸດຂອງຍີ່ປຸ່ນຢ່າງເຊັ່ນ “ ໂຄຈິກິ “ ( Kojiki) ແລະ “ ນິຮົງໂຊກິ “　(Nihon shoki) ຈັກກະພັດອົງປະຈຸບັນ ( ເຮເຊ ເຕນໂນ ) ນັບເປັນຈັກກະພັດອົງທີ່ 125 ໃນລາດຊະວົງທີ່ສືບເຊື້ອສາຍກັນມາໂດຍຕະລອດ ຕະກູນຂອງຈັກກະພັດຫຼືລາຊາສຳນັກທີ່ໄດ້ປົກຄອງຍີ່ປຸ່ນມາຕັ້ງແຕ່ສະໄໝສ້າງຊາດໃນຍຸກບູຮານເປັນທີ່ເຄົາລົບເທີດທູນຂອງປະຊາຊົນໃນແງ່ຂອງທີ່ຍຶດໝັ້ນທາງດ້ານສາດສະໜາແລະວັດທະນະທຳຫຼາຍກ່ວາທີ່ຈະເປັນຜູ້ມີອຳນາດທາງການເມືອງ ເຖິງວ່າບາງຄັ້ງຈັກກະພັດຈະຖືກໃຊ້ເປັນພຽງເຄື່ອງມືໂດຍຜູ້ມີອຳນາດຢ່າງແທ້ຈິງແຕ່ສະຖາບັນຈັກກະພັດກໍ່ຍັງຄົງສືບທອດຕໍ່ກັນມາໃນປະວັດສາດ ກ່າວໄດ້ວ່າປະວັດສາດຂອງຍີ່ປຸ່ນກໍ່ຄືປະວັດສາດຂອງ ຈັກກະພັດ ແລະຄວາມສຳພັນທາງການເມືອງລະຫວ່າງຈັກກະພັດກັບຜູ້ມີອຳນາດໃນແຕ່ລະຍຸກສະໄໝ ສິ່ງໜຶ່ງທີ່ສາມາດຍືນເລື່ອງນີ້ໄດ້ກໍ່ຄືການທີ່ຍີ່ປຸ່ນໄດ້ສືບທອດການນັບສັກກະລາດ (ປີ) ແບບ “ ເກັ້ງໂງ “ (Gengou) ປີ ໂຊວາ ( 1926-89)

ປີ ເຮເຊ ເລີ້ມແຕ່ ປີ 1989 ເປັນຕົ້ນມາ ຊຶ່ງນັບຕາມຍຸກທີ່ຈັກກະພັດແຕ່ລະອົງຂື້ນຄອງປະເທດ.
ໃນສະໄໝທີ່ນັກລົບຄອງອຳນາດ ( ສະໄໝຄະມະກຸລະ ຈົນເຖິງສະໄໝເອໂດະ ( 1200-1868) ຈັກກະພັດຕົກຢູ່ໃນຖານະລຳບາກ " ນັກລົບນີ້ໝາຍເຖິງ ສາມູໄລ " ແຕ່ຫຼັງຈາກທີ່ຄະນະນັກລົບຊັ້ນຕ່ຳໄດ້ທຳການປະຕິຮູບເມຈິ ສະໄໝເມຈິ (ເລີ້ມແຕ່ປີ 1868 - 1912 ) ຈັກກະພັດກໍ່ຖືຍົກລະດັບຂື້ນສູ່ອຳນາດອີກ ຈັກກະພັດຄອງປະເທດສືບຕໍ່ກັນມາໂດຍມີອຳນາດບໍລິຫານປະເທດ ຫຼາຍແດ່ ນ້ອຍແດ່ ມີສະພາບຂື້ນໆລົງໆແລ້ວແຕ່ຍຸກສະໄໝ ແຕ່ໂດຍເນື້ອໃນອັນແທ້ຈິງແລ້ວກໍ່ຍັງມີຄວາມກ່ຽວຄ້ອງກັບຄວາມເຊື່ອຖືທາງສາດສະໜາດັ້ງເດີມ.

## 2）ຈັກກະພັດກັບບໍລະດົກທາງວັດທະນະທຳ 天皇と文化遺産

ກ່າວກັນວ່າແນວຄິດທາງສາດສະໜາຂອງຄົນຍີ່ປຸ່ນບໍ່ແມ່ນລັດທິເຊື່ອຖືພະເຈົ້າອົງດຽວ ເປັນລັດທິທີ່ນັບຖືພະເຈົ້າຫຼາຍອົງ " ຕະຊິ່ນ " (多神) ເຊື່ອກັນວ່າທີ່ຍີ່ປຸ່ນມີເທບພະເຈົ້າຢູ່ຫຼວງຫຼາຍ ແລະເທບພະເຈົ້າທີ່ເປັນສູນກາງຂອງເທບພະເຈົ້າທາງປ່ວງກໍຄື " ອະມະເທະລະສຸ ໂອມິຂະມິ (天照大神) ຊຶ່ງເປັນບັນທະບູລຸດຂອງຕະກູນຈັກກະພັດ, ແນວຄິດທີ່ວ່າຈັກກະພັດຄື ເທບພະເຈົ້າລົງມາເກີດເປັນມະນຸດ ລະນັ້ນກໍ່ມາຈາກຈຸດນີ້ເອງ ກ່ອນສົງຄາມໂລກຄັ້ງທີ່ສອງ ຈັກກະພັດໄດ້ຖືຍົກຍ້ອງໃຫ້ເປັນ " ເທບພະເຈົ້າໃນຮ່າງມະນຸດ " ແລະເປັນສັນຍາລັກຂອງສາສະໜາ ຊິນໂຕ ແຕ່ຫຼັງສົງຄາມຈັກກະພັດກໍ່ໄກ້ປະກາດຕົວວ່າຕົນເປັນມະນຸດ ແລະປະຕິເສດຄວາມເປັນພະເຈົ້າ ແນວຄິດທີ່ວ່າຈັກກະພັດຄືພະເຈົ້າເປັນພຽງສິ່ງທີ່ນັກລົບຊັ້ນຕ່ຳກຳການປະຕິຮູບເມຈິ ແລະກອງທັບໄດ້ສ້າງຂື້ນມາເພື່ອໃຊ້ຈັກກະພັດໃຫ້ເປັນປະໂຫຍດຕໍ່ການເສີ້ມສ້າງອຳນາດຂອງຕົນ ສ່ວນໃນປະຊາຊົນທົ່ວໄປຈະເອີ້ນຈັກກະພັດວ່າ "ເທນໂນຊັງ " (天皇) ດ້ວຍຄວາມສະນິດສະນົມ.
ຕະກູນຈັກກະພັດມີບົດບາດໃນຖະນະຜູ້ປະກອບພິທີການນົບໄຫວເທບພະເຈົ້າມາແຕ່ສະໄໝບູຮານ ນອກຈາກນີ້ຕະກູນຈັ້ກກະພັດຍັງເປັນຜູ້ສືບທອດມໍລະດົກທາງວັດທະນະທຳຕ່າງໆດັ່ງທີ່ສາມາດເຫັນຈາກສູນຮັກສາວັດທຸບູຮານ "ໂຊໂຊອິນ" (正倉院) ໃນເມືອງນາລາ ແລະໄດ້ສືບທອດສິນລະປະວັເທະນະທຳຂອງຍີ່ປຸ່ນທີ່ມີມາແຕ່ບູຮານຢ່າງເຊັ່ນ " ອຸຕະໄກ່ " (歌会) ການຊຸມນຸມກັນເພື່ອແຕ່ງໂຄງກອນ " ງະງະກຶ " (雅楽) ການແຕ່ງບັນເລງເພງແລະ " ຊິນຈິ " (神事) ພິທີນົບໄຫວເທບພະເຈົ້າ.
ມາເຖິງປັດຈຸບັນທຸກໆປີລະດູປູກເຂົ້າ ຈັກກະພັດອົງປັດຈຸບັນກໍ່ຍັງປະກອບພະລາຊາພິທີປູກເຂົ້າແລະກ່ຽວເຂົ້າໃນນາທີ່ມີຢູ່ໃນວັງຂອງພະອົງ, ຕອນທີ່ມີແພ້ສົງຄາມໂລກຄັ້ງທີ່ສອງ ຕໍ່ຝ່າຍສຳພັນທະມິດ ສິ່ງທີ່ລັດຖະບານເປັນຫ່ວງທີ່ສຸດໃນການຮັບເອົາເງື່ອນໄຂກໍ່ຄືການຮັກສາແບບແຜນການປົກຄອງເດີມ ກໍ່ຄືການຮັກສາເອົາສະຖາບັນຈັກກະພັດເອົາໄວ້ ໃນດ້ານຂອງນະໂຍບາຍການເຂົ້າຍຶດຄອງຂອງຝ່າຍສຳພັນທະມິດກໍ່ເປັນທີ່ທົກຖຽງກັນວ່າຈະໃຊ້ລະບອບລາຊາທິປະໄຕພາຍໃຕ້ລັດຖະທຳມະນູນ ຫຼື ໃຊ້ລະບອບສາທາລະນະລັດ ແຕ່ລັດຖະບານຂອງອາເມລິກາໄດ້ຄຳນຶງເຫັນວ່າຫາກຍົກເລີກໃຊ້ລະບົບຈັກກະພັດຈະເຮັດໃຫ້ປະເທດຍີ່ປຸ່ນເກີດຄວາມວຸ້ນວາຍແລະການເຂົ້າຍຶດຄອງຂອງອາເມລິກາກໍ່ຈະບໍ່ປະສົບຜົນ ຈຶ່ງໄດ້ເອົາລະບົບຈັກກະພັດໃວ້ , ແຕ່ວ່າໃນລັດຖະທຳມະນູນສະບັບເກົ່າອຳນາດອະທິປະໄຕເປັນຂອງຈັກກະພັດ, ແຕ່ໃນສະບັບໃໝ່ອຳນາດອະທິປະໄຕເປັນຂອງປະຊາຊົນແລະສະຖານະພາບຂອງຈັກກະພັດກໍ່ຄື " ສັນຍາລັກ " ຂອງຍີ່ປຸ່ນ ດັ່ງທີ່ກ່າວໄວ້ໃນມາດຕາທີ່ 1 ຂອງລັດຖະທຳມະນູນວ່າ " ຈັກກະພັດເປັນສັນຍາລັກຂອງປະເທດແລະສະຖານນະພາບນັ້ນຂື້ນຢູ່ກັບຄວາມຄິດເຫັນໂດຍຮວມຂອງປະຊາຊົນຜູ້ມີອຳນາດອະຖິປະໄຕ" .

ເຖິງຈະຮູ້ຈັກມີຄວາມຂັດແຍ່ງກັນວ່າສະຖາບັນຈັກກະພັດບໍ່ໜ້າຈະຝືນໃຈປັບຕົວເຂົ້າກັບລະບອບປະຊາທິປະໄຕແຕ່ປະຊາຊົນຍີ່ປຸ່ນກໍ່ເລືອກເອົາອຳນາດສ່ວນໜຶ່ງທີ່ເປັນຄຸນທາດໃນການປົກຄອງປະເທດໃຫ້ແກ່ຈັກກະພັດ.

## 3． ການເມືອງຫຼັງສົງຄາມໂລກ　戦後政治の流れ

### 1） ບົດບາດຂອງ GHQ ແລະການຕັ້ງລັດຖະບານທ່ານ ໂຍຊິດະ　吉田内閣

ນະໂຍບາຍການຍຶດຄອງຍີ່ປຸ່ນຂອງກອງທັບສະຫະລັດອາເມລິກາ ເລີ່ມຈາກການປະຕິເສດລະບົບເກົ່າໆຂອງຍີ່ປຸ່ນໃນສະໄໝກ່ອນສົງຄາມ ຈຸດໝາຍຂອງອາເມລິກາກໍ່ຄືບໍ່ຢາກໃຫ້ຍີ່ປຸ່ນລຸກລານສັນຕິພາບຂອງໂລກອີກ ຈຶ່ງໄດ້ໃຫ້ຄວາມສຳຄັນກັບນະໂຍບາຍ ປອດທະຫານແລະການລະບອບປະຊາທິປະໄຕແບບຕະວັນຕົກມາໃຊ້ , ກ່ອນອື່ນໃດຝ່າຍສັມພັນທະມິດໄດ້ເປີດສານທະຫານນານາຊາດແຫ່ງຕາວັນອອກໄກເພື່ອຊອບສວນເຖິງຄວາມຮັບພິບຊອບຕໍ່ສົງຄາມຂອງອາດີດນາຍົກລັດຖະມົນຕີ ທ່ານ “ ໂທໂຈ ຮິເດະກິ “ (東条　英機)ແລະຜູ້ນຳສ່ວນອື່ນໆໃນໄລຍະເຮັດສົງຄາມແລະສານໄດ້ຕັດສິນວ່າ ຄ່າຄວາມນິຍົມຕ່າງໆຂອງປະເທດຍີ່ປຸ່ນກ່ອນສົງຄາມນັ້ນເປັນສິ່ງທີ່ຜິດ ພ້ອມກັນນັ້ນກໍ່ລົງມືແກ້ໄຂລັດຖະທຳມະນູນແລະພະຍາຍາມທີ່ຈະສອດແທກແນວຄິດທີ່ຈະຮັກສາ ສະຖານນະພາບທີ່ເປັນກາງແລະບໍ່ໃຫ້ມີອາວຸດໄວ້ຄອບຄອງໄດ້ມີການດຳເນີນມາດຕາການຕ່າງໆ ທີ່ເປັນຮູບທະລົ່ມລັດຖະບານຍີ່ປຸ່ນເຊັ່ນ:
ການສະລາຍຕົວຂອງກອງທັບຍີ່ປຸ່ນ, ການປະຕິເສດຄວາມເປັນເທບພະເຈົ້າສົມມຸດຂອງຈັກກະພັດ, ການປົດປ່ອຍຜູ້ຕ້ອງຫາທາງການເມືອງແລະການກະຈາຍພື້ນທີທາງກະສິກຳຈາກເຈົ້າຂອງທີ່ດິນລາຍໃຫ່ຍເປັນຕົ້ນ.

ໃນໄລຍະເລີ່ມຕົ້ນ ຄະນະຍຶດຄອງຂອງກອງທັບອາເມລິກາໄດ້ມຸ່ງຫວັງທີ່ຈະສົ່ງເສີມພັກສັງຄົມນິຍົມ ( Japan socialist party = PSP ) ພັກສັງຄົມນິຍົມດັ່ງກ່າວໃນໄລຍະນັ້ນສາມາດຕັ້ງຄະນະລັດຖະບານໄດ້ກໍ່ຕາມແຕ່ຂາດຄວາມສາມາດບໍລິຫານແລະຍັງມີການສໍປະຊາຊົນບັງລັດຈຶ່ງເປັນເຫດໃຫ້ລັດຖະບານຕ້ອງລົ້ມລະລາຍໄປໃນທີ່ສຸດ, ຜູ້ທີ່ເຂົ້າມາມີບົດບາດແທນກໍ່ຄືພັກ ເສລີນິຍົມ ( Liberal party ) ຊຶ່ງເປັນພັກຝ່າຍອານຸຮັກນິຍົມ ( ພາຍຫຼັງມາກ່າຍເປັນພັກ ເສລີປະຊາທິປະໄຕໃຍປັດຈຸບັນ ).
Liberal Democratic party = LDP ທີ່ນຳໂດຍທ່ານ ໂຍຊິດະ ຊິເງລຶ (吉田　茂) ຜູ້ທີ່ເຄີຍເປັນນັກການທູດມາກ່ອນແລະໃນລະວ່າງສົງຄາມເຄີຍຖືກກອງສະລະວັດ “ ເຄມເປໄຕ “ (憲兵隊) ຈັບກຸມໃນຂໍ້ຫາຕໍ່ຕ້ານສົງຄາມດ້ວຍມີປະວັດຄວາມເປັນມາດັ່ງກ່າວນີ້ທ່ານ ໂຍຊິດະ ຈຶ່ງໄດ້ຮັບຄວາມໄວ້ວາງໃຈຈາກພົນເອກ ແມກຄາເທີ ຜູ້ບັນຊາການສູງສຸດຂອງຝ່າຍພັນທະມິດແລະດ້ວຍຄວາມສາມາດທາງການເມືອງຢ່າງມີສີມືຈຶ່ງໄດ້ດຳລົງຕຳແໜ່ງຜູ້ນຳທາງການເມືອງຂອງຍີ່ປຸ່ນໃນໄລຍະຫຼັງສົງຄາມ.

<u>ຄວາມຂັດແຍ້ງໃນກົລະນີຂອງສົນທິສັນຍາຄວາມມັ່ນຄົງແລະບໍລິຫານປະເທດເປັນເວລາຍາວຂອງພັກ LDP</u>

ຜົນສະທ້ອນມາຈາກສົງຄາມເກົາຫລີແລະສົງຄາມເຢັນກັບລັດເຊັຽ ເຮັດໃຫ້ອາເມລິກາເລີ້ມປ່ຽນນະໂຍບາຍ

ຍຶດຄອງໂດຍຍິນຍອມໃຫ້ປະເທດຍີ່ປຸ່ນມີກຳລັງທະຫານເພື່ອປ້ອງກັນຕົນເອງໄດ້ ແລະນະໂຍບາຍຕ່າງໆກໍ່ເລີ້ມໂນ້ມອຽງຈາກການປະຕິຮູບທຸກຢ່າງມາເປັນແບບອານຸລັກດັ້ງເດີມ.

ໃນປີ 1951 ໄດ້ມີການເຊັນສົນທິສັນຍາສັນຕິພາບຂຶ້ນທີ່ ຊັນຟລັນຊິດສໂກ ປະເທດອາເມລິກາ ຍ້ອນກຸ່ມປະເທດລັດເຊັຽບໍ່ໄດ້ລົງນາມຮັບເອົາສົນທິສັນຍາດັ່ງກ່າວ ຈຶ່ງເຮັດໃຫ້ກຸ່ມຝ່າຍຊ້າຍຂອງຍີ່ປຸ່ນເຄື່ອນໄຫວຕໍ່ຕ້ານສົນທິສນັຍາສັນຕິພາບແລະເກີດຄວາມຂັດແຍ້ງກັບກຸ່ມຝ່າຍຂວາຢ່າງຮຸນແຮງ ຈາກຄວາມຂັດແຍ້ງໃນນະໂຍບາຍສົນທິສັນຍາສັນຕິພາບດັ່ງກ່າວເຮັດໃຫ້ພັກສັງຄົມນິຍົມ ( JSP ) ແຕກກຸ່ມອອກເປັນຝ່າຍຊ້າຍແລະຂວາ ແຕ່ໃນທີສຸດກໍກັບມາລວມກັນອີກ.

ການລວມຕົວຂອງພັກ ( JSP) ແລະຄວາມຂັດແຍ້ງເພີ່ມທະວີຂື້ນຂອງສົງຄາມເຢັນເຮັດໃຫ້ພັກການເມືອງຝ່າຍອານຸຮັກນິຍົມມາລວມຕົວກັນຈັດຕັ້ງເປັນພັກເສລີປະຊາທິປະໄຕ ( LDP) ຂຶ້ນມາໃນປີ 1960 ຄະນະລັດຖະບານຊື່ງນຳໂດຍພັກ LDP ແລະຝ່າຍຄ້ານໄດ້ຂັດແຍ້ງກັນຢ່າງຮ້າຍແຮງໃນກໍລະນີການແກ້ໄຂສົນທິສັນຍາຄວາມມັ່ນຄົງລະຫວ່າງຍີ່ປຸ່ນກັບອາເມລິກາ ປະຊາຊົນກໍ່ມີຄວາມຄິດເຫັນແຕກຕ່າງກັນ ຕຶກສະພາແຫ່ງຊາດຖືກອ້ອມດ້ວຍຜູ້ເດີນຂະບວນຕໍ່ຕ້ານສົນທິສັນຍາຄວາມມັ່ນຄົງຕໍ່ເນື່ອງກັນເກືບທຸກມື້.

ພັກ LDP ຫຼັງຈາກເຮັດຮ່າງສົນທິສັນຍານີ້ຜ່ານສະພາແລ້ວກໍ່ໄດ້ປະກາດແຜນການເພີ້ມລາຍໄດ້ສ່ວນບຸກຄົນໃຫ້ເປັນສອງເທົ່າ ຕໍ່ມາກໍ່ໄດ້ນຳພາປະເທດຜ່ານວິກິດການນ້ຳມັນເຊື້ອໄຟ ( ປີ 1974 ) ໄດ້ແລະໄດ້ສ້າງພື້ນຖານໃນການກຳອຳນາດບໍລິຫານປະເທດໄດ້ຍາວນານເຖິງ 38 ປີ ແຕ່ຫຼັງຈາກເກີດການ ສໍລາດບັງລັດ ໃນເຫດ “ ລີກຶລຸດ “ ( Recruit Scandal ) ການນຳລະບົບພາສີຊົມໃຊ້ມາໃຊ້ແລະການເປີດເສລີໃນການນຳເຂົ້າສິ້ນຄ້າປະເພດກະສິກຳຈຶ່ງເຮັດໃຫ້ພັກ LDP ໄດ້ຮັບການວິພາກວິຈານຈາກປະຊາຊົນຢ່າງໜັກແລະພ່າຍແພ້ການເລືອກຕັ້ງສະມາສິກຜູ້ແທນ ວຸດທິສະພາ (ສະພາສູງ) ໃນປີ 1989 ຫຼັງຈາກນັ້ນກໍ່ເກີດຄວາມຂັດແຍ້ງພາຍໃນພັກດ້ວຍເລື້ອງການປະຕິຮູບການເມືອງເຮັດໃຫ້ພາຍໃນພັກແຕກແຍກແລະພ່າຍແພ້ການເລືອກຕັ້ງສະມາຊິກປະຊາຊົນໃນສະພາຕ່ຳໃນປີ 1993 ອີກນັບວ່າເປັນທານສິ້ນສຸດຂອງການບໍລິຫານໂດຍພັກໃຫ່ຍພັກດຽວຄື ພັກ LDP ແລະເລີ້ມເຂົ້າຊູ່ຍຸກຂອງລັດຖະບານປະສົມພາຍຫຼັງຈາກການເລືອກຕັ້ງ ພັກ LDP ໄດ້ກາຍເປັນພັກຝ່າຍຄ້ານ, ແຕ່ຫຼັງຈາກນັ້ນ 1 ປີເຄິ່ງກໍ່ສາມາດກັບຄືນມາເປັນລັດຖະບານອີກໃນປີ 1996 ເພາະລັດຖະບານປະສົມສຸດນັ້ນໄດ້ມີການຂັດແຍ້ງກັນພາຍໃນພັກຮ່ວມລັດຖະບານ.

## 4． ຄະນະລັດຖະມົນຕີ 内閣（ないかく）

### 1） ການຄັດເລືອກນາຍຍົກລັດຖະມົນຕີແລະການຈັດຕັ້ງຄະນະລັດຖະມົນຕີ

### 総理大臣選出と組閣

ຍີ່ປຸ່ນໃຊ້ລະບົບຄະນະລັດຖະມົນຕີໂດຍຄວາມໄວ້ວາງໃຈຈາກລັດຖະສະພາ ໃນລັດຖະທຳມະນູນໄດ້ໃຫ້ອຳນາດການປົກຄອງແກ່ພົນລະເຮືອນໂດຍກຳໜົດໄວ້ວ່າ : ນາຍຍົກລັດຖະມົນຕີແລະລັດຖະມົນຕີອື່ນໆຈະຕ້ອງເປັນພົນລະເຮືອນ ອັນນີ້ເປັນສິ່ງສະທ້ອນໃຫ້ເຫັນແນວຄວາມຄິດຂອງຄະນະຍຶດຄອງປະເທດຍີ່ປຸ່ນສະໄໝແພ້ສົງຄາມ ທີ່ຢ້ານການກັບມາມີອຳນາດຂອງລັດຖະບານຂອງລັດທິນິຍົມທະຫານນັ້ນເອງ ແລະຈະມີການສະເໜີເອົາຊື່ນາຍຍົກລັດຖະມົນຕີຈາກບັນດາສະມາຊິກສະພາໂດຍຄວາມເຫັນດີຂອງສະພາ ແລະນາຍຍົກຈະແຕ່ງຕັ້ງລັດຖະມົນຕີຕາມທີ່ລັດຖະທຳມະນູນກຳໜົດໄວ້.

"ຈຳນວນກ່ວາເຄິ່ງໜຶ່ງຂອງຄະນະລັດຖະມັນຕີຈະຕ້ອງຄັດເລືອກຈາກສະມາຊິກຂອງສະພາ "

ຕຳແໜ່ງລັດຖະມົນຕີມີ 21 ຕຳແໜ່ງ ແຕ່ໃນປີ 2001 ໄດ້ມີການປະຕິຮູບການເມືອງໂດຍຈັດລະບົບກະຊວງແລະທະບວງໃໝ່ຂຶ້ນ ຈຶ່ງເຫຼືອພຽງ 10 ກະຊວງ ແລະ 1 ທະບວງ 1 ກຳມະທິການ 1 ຫ້ອງການຄະນະລັດຖະມົນຕີຕາມລຳດັບດັ່ງນີ້:

- 内閣府　Cabinet Office　ຫ້ອງການຄະນະລັດຖະບານ
  - 宮内庁　Imperial Household Agency　ທະບວງພະລາຊະວັງ
  - 公正取引委員会　Japan Fair Trade Commission ຄະນະກຳມະການກວດກາການຄ້າທີ່ເປັນທຳ
  - 国家公安委員会　National Public Safety Commission ຄະນະກຳມະການປ້ອງກັນຄວາມສະຫງົບ ກຳມະທິການຄວາມໝັ້ນຄົງແຫ່ງຊາດ ( ລວມເອົາກະຊວງມະຫາໄທ)
    - 警察庁　National Police Agency　ທະບວງຕຳລວດ
  - 金融庁　Financial Services Agency　ທະບວງການທະນາຄານ
  - 消費者省　Consumer Affairs Agency　ທະບວງການຄຸ້ມຄອງຜູ້ບໍລິໂພກ
- 総務省　Ministry of Internal Affairs and Communications　ກະຊວງປົກຄອງ,ໄປສະນີແລະໂທລະຄົມ
- 法務省　Ministry of Justice　ກະຊວງຍຸຕິທຳ
- 外務省　Ministry of Foreign affairs　ກະຊວງການຕ່າງປະເທດ
- 財務省　Ministry of Finance　ກະຊວງການເງິນ
- 文部科学省　Ministry of Education, Culture, Sport, Science and Technology　ກະຊວງການສຶກສາ, ວັດທະນາທຳ,ກິລາ, ວິທະຍາສາດແລະເຕັກໂນໂລຍີ
- 厚生労働省　Ministry of Heealth,Labor and Welfare　ກະຊວງສາທາລະນະສຸກ,ແຮງງານແລະສະວັດດີການ
- 農林水産省　Ministry of Agriculture, Forestry and Fisheries　ກະຊວງກະສິກຳປ່າໄມ້ແລະປະມົງ
- 経済産業省　Ministry of Economy, Trade and Industry

ກະຊວງເສດຖະກິດ,ການຄ້າແລະອຸດສາຫະກຳ

・国土交通省　　Ministry of Land, Infrastructure and Transport
ກະຊວງແຜ່ນພັງ,ກໍ່ສ້າງແລະຂົນສົ່ງ

・環境省　　Ministry of the Environment　ກະຊວງພາວະສິ່ງແວດລ້ອມ

・防衛庁　　Japan Defense Agency　ທະບວງປ້ອງກັນປະເທດ

・復興庁　　Reconstruction Agency　ທະບວງຟື້ນຟູໄພແຜ່ນດິນໄຫວ (ປີ 2011/3/11)

## 2）ການບໍລິຫານງານຂອງຄະນະລັດຖະມົນຕີ　内閣の運営（うんえい）

ຍີ່ປຸ່ນມີລະບົບ (ກົງຈັກບໍລິຫານ) ກຸ່ມພະນັກງານແກນນຳ ( Bureaucrat )= (官僚) =(ຄັນລຽວ) ທີ່ແຂງແຮງມາແຕ່ເດີມແລະພັກການເມືອງຍັງອາໃສລາດສະການໃນການວາງນະໂຍບາຍແລະມາດຕາການຕ່າງໆດັ່ງນັ້ນເຖິງແມ່ນວ່າຍີ່ປຸ່ນຈະໄດ້ຊື່ວ່າໃຊ້ລະບົບການປົກຄອງໂດຍພັກການເມືອງ ແຕ່ໃນຄວາມເປັນຈິງແລ້ວອຳນາດບໍລິຫານທີ່ເປັນເສົາຫຼັກນັ້ນ ບໍ່ໄດ້ຕົກຢູ່ກັບນັກການເມືອງ ແລະແນວໂນ້ມເຊັ່ນນີ້ກໍ່ເຫັນໄດ້ແຈ້ງຂ່າວຂຶ້ນເມື່ອເຂົ້າສູ່ສະໄໝທີ່ມີພັກການເມືອງຫຼາຍພັກແລະມີລັດຖະບານປະສົມ
ເຮັດໃຫ້ແຕ່ລະພັກຕ້ອງພະຍາຍາມກວດສອບ ແລະໜ່ວງໜ່ຽວກັນ ແລະປານີປະນອມກັນ.
ລັດຖະບານຈະເປີດປະຊຸມຄະນະລັດຖະມົນຕີອາທິດລະ 2 ຄັ້ງ ໃນວັນອັງຄານແລະວັນສຸກແຕ່ເນື້ອໃນການປະຊຸມນັ້ນຈະຖືກກຳນົດກ່ອນ 1 ມື້ ໃນກອງປະຊຸມຂອງຄະນະປະລັດກະຊວງໄວ້ແລ້ວ ດັ່ງນັ້ນເພື່ອທີ່ຈະຜັກດັນນະໂຍບາຍທີ່ວ່າ " ຄວາມເປັນຜູ້ນຳທາງການເມືອງ " ຈຶ່ງໄດ້ມີການພິຈະລະນາແນວທາງທີ່ຈະເສີມສ້າງຄວາມແຂງແຮງໃຫ້ກັບກົນໄກການເຮັດວຽດຂອງຄະນະລັດຖະມົນຕີ, ໂດຍສະເພາະແມ່ນກົນໄກການເຮັດວຽກຂອງທຳນຽມນາຍົກ ນອກຈາກນີ້ ຍັງເກີດເລື່ອງທີ່ວ່າ ຜູ້ທີ່ເປັນແກນນຳ ສໍລາດບັງລັດ (ຄໍລັບຊັ່ນ) ໃນກະຊວງການເງິນແລະກະຊວງສາທາລະນະສຸກແລະສະວັດດີການສັງຄົມ ເຮັດໃຫ້ມີສຽງວິພາກວິຈານຕໍ່ລະບົບແກ່ນນຳຢ່າງຮ້າຍແຮງຈາກປະຊາຊົນ ຈຶ່ງໄດ້ມີຄວາມພະຍາຍາມທີ່ຈະຜັກດັນການປະຕິຮູບລະບົບການບໍລິຫານ ການຜ່ອນຜັນລະບຽບກົດເກນ ຕະລອດຈົນລົບລ້າງລະບົບການປົກຄອງໂດຍກຸ້ມແກ່ນນຳ ແລະເຮັດໃຫ້ເກີດລະບົບການປົກຄອງໂດຍການນຳຂອງນັກການເມືອງ ອັນນີ້ກໍ່ໄດ້ກາຍເປັນຫົວຂໍ້ນະໂຍບາຍຂອງແຕ່ລະພັກການເມືອງຢູ່ໃນເວລານີ້.



ສະພາແຫ່ງຊາດຍີ່ປຸ່ນ

## 5． ລະບົບການເລືອກຕັ້ງ 選挙制度

### 1） ລະບົບການເລືອກຕັ້ງ 選挙制度

ການເລືອກຕັ້ງສາມາດແບ່ງກ້ວາງອອກເປັນການເລືອກຕັ້ງທົ່ວປະເທດແລະການເລືອກຕັ້ງສ່ວນທ້ອງຖິ່ນ ການເລືອກຕັ້ງທົ່ວປະເທດຄື ການເລືອກຕັ້ງເອົາສະມາຊິກສະພາຜູ້ແທນປະຊາຊົນຂອງ ສະພາຕ່ຳແລະສະພາສູງ ສ່ວນການເລືອກຕັ້ງສ່ວນທ້ອງຖິ່ນກໍ່ຄືການເລືອກເອົາຜູ້ບໍລິຫານສ່ວນແຂວງ ( ເຈົ້າແຂວງ ) ເມືອງ ( ເຈົ້າເມືອງ ) ບ້ານ ( ນາຍບ້ານ ) ແລະການເລືອກຕັ້ງເອົາສະມາຊິກສະພາບໍລິຫານທ້ອງຖິ່ນ.

ໃນປີ ຄ ສ 1994 ໄດ້ມີການແກ້ໄຂກົດໝາຍການເລືອກຕັ້ງສະມາຊິກຜູ້ແທນປະຊາຊົນຈຶ່ງມີການປ່ຽນແປງຈາກລະບົບເຂດເລືອກຕັ້ງຂະໜາດກາງທີ່ໃຊ້ກັນມາເປັນເວລາດົນນານ ເປັນລະບົບປະສົມລະຫວ່າງລະບົບເຂດນ້ອຍ ( ເຂດດຽວຄົນດຽວ)ກັບລະບົບສັດສ່ວນຈາກບັນຊີລາຍຊື່ພັກການເມືອງ ສະມາຊິກຜູ້ແທນສະພາຕ່ຳມີ 480 ຄົນ ໃນຈຳນວນນີ້ ມີສ່ວນໜຶ່ງມາຈາກການເລືອກຕັ້ງໃນເຂດນ້ອຍແລະອີກສ່ວນໜຶ່ງມາຈາກລະບົບສັດສ່ວນທີ່ແບ່ງເຂດການເລືອກຕັ້ງອອກເປັນ 11 ເຂດ.

ຜູ້ມີສິດສະມັກເຂົ້າຮັບເລືອກຕັ້ງເປັນສະມາຊິກຜູ້ແທນສະພາຕ່ຳແລະສະພາບໍລິຫານສ່ວນທ່ອງຖິ່ນນັ້ນຕ້ອງມີອາຍຸຄົບ 25 ປີ ສ່ວນສະມາຊິກຜູ້ແທນສະພາສູງຕ້ອງມີອາຍຸຄົບ 30 ປີບໍລິບູນ ແລະຜູ້ມີສິດອອກສຽງເລືອກຕັ້ງຄື ຍິງແລະຊາຍທີ່ມີອາຍຸ 20 ປີຂຶ້ນໄປ.

ສະມາຊິກຜູ້ແທນສະພາສູງມີ 242 ຄົນ ໃນຈຳນວນນີ້ 96 ຄົນ ມາຈາກລະບົບສັດສ່ວນທີ່ຖືເອົາທົ່ວປະເທດເປັນເຂດເລືອກຕັ້ງ ສ່ວນອີກ 146 ຄົນມາຈາກການເລືອກຕັ້ງໃນແຕ່ລະແຂວງ ໂດຍ 1 ແຂວງມີຜູ້ແທນ 1-4 ຄົນ.

### 2） ອາຍຸປີການຫຼືວາລະຂອງສະມາຊິກຜູ້ແທນສະພາ 議員の任期

ສະພາສູງມີວາລະ 6 ປີ ນອກນັ້ນມີວາລະ 4 ປີ ສະພາບໍລິຫານສ່ວນທ້ອງຖິ່ນຈະຖືເລືອກຕັ້ງໃໝ່ຫຼັງຈາກໝົດອາຍຸປີການຫຼືວາລະເວັ້ນແຕ່ວ່າໄດ້ຖືກປະຊາຊົນລົງຂະແນນໃຫ້ຍຸບສະພາສ່ວນສະມາຊິກຜູ້ແທນສະພາຕ່ຳນັ້ນມັກຈະຢູ່ບໍ່ຄົບວາລະ 4 ປີ ໂດຍສະເລ່ຍແລ້ວຈະມີການຍຸບສະພາແລະມີການເລືອກຕັ້ງໃໝ່ຢູ່ເລື້ອຍໆໃນໄລຍະ2ປີເຄິ່ງ. <u>ໄລຍະການເລືອກຕັ້ງນັ້ນຍົກເວັ້ນ</u>ຍົກເວັ້ນສະມາຊິກສະພາທີ່ມີການຍຸບໄດ້ແລ້ວ ການເລືອກຕັ້ງຜູ້ແທນສະມາຊິກສະພາສູງນັ້ນທຸກ3 ປີມີການເລືອກຕັ້ງໃໝ່ໃນຈຳນວນເຄິ່ງໜຶ່ງຂອງຜູ້ແທນໃນເດືອນ ກໍລະກົດ (ເດືອນ 7) ສ່ວນການເລືອກຕັ້ງສະມາຊິກສະພາບໍລິຫານຂອງທ້ອງຖິ່ນນັ້ນຈະມີຂຶ້ນທຸກໆ 4 ປີ ໃນເດືອນ ເມສາ ພຶດສະພາ ການເລືອກຕັ້ງນີ້ຮຽກວ່າ " ການເລືອກຕັ້ງສ່ວນທ້ອງຖິ່ນລວມທົ່ວປະເທດ " ອັດຕາສ່ວນຜູ້ໄປໃຊ້ສິດທິປ່ອນບັດໃນການເລືອກຕັ້ງຂອງທຸກປະເພດນັ້ນມີແນວໂນ້ມລຸດລົງທຸກປີເຊິ່ງເປັນຜົນເນື່ອງມາຈາກການບໍ່ໄປໃຊ້ສິດທິປ່ອນບັດຂອງຄົນໜຸ່ມສາວລຸ່ນໃໝ ຈຳນວນຜູ້ໄປປ່ອນບັດໂດຍສະເລ່ຍ

ແລ້ວຈະເປັນ60%ໂດຍອັດຕາສ່ວນໃນຕົວເມືອງຈະຕ່ຳຄືປະມານ50%ສ່ວນໃນຊົນນະບົດນັ້ນຈະມີອັດຕາສູງ

ນອກຈາກສະມາຊິກຜູ້ແທນບາງສ່ວນໂດຍທົ່ວໄປແລ້ວສະມາຊິກຜູ້ແທນໃນສະພາຕ່ຳແລະສູງນັ້ນຈະສັງກັດຢູ່ໃນພັກການເມືອງໃດໜຶ່ງ ສ່ວນສະມາຊິກສະພາບໍລິຫານຂັ້ນແຂວງນັ້ນມັກຈະບໍ່ປະກາດພັກການເມືອງທີ່ຜູ້ສະມັກສັງກັດຢູ່ຢ່າງແຈ້ງຂາວ ໂດຍສະເພາະໃນກໍລະນີການເລືອກຕັ້ງຜູ້ບໍລິຫານຂັ້ນແຂວງ (ເຈົ້າແຂວງ) ແລະຂັ້ນເມືອງ (ເຈົ້າເມືອງ) ຈະມີແນວໂນ້ມເຊັ່ນນີ້ສູງ ທີ່ເປັນເຊັ່ນນີ້ກໍ່ເພາະວ່າຫາກລົງສະມັກເລືອກຕັ້ງໃນ

ນາມຂອງ “ ພັກປະຊາຊົນແຂວງຫຼືເມືອງ “ ຈະມີຜົນດີກ່ວາຄືບ່ອນທີ່ວ່າສາມາດໄດ້ຖານສຽງສະໜັບສະໜຸນໄດ້ກ້ວາງຂວາງກ່ວາ, ແຕ່ສ່ວນໃຫ່ຍນັກການເມືອງທ້ອງຖິ່ນເຫຼົ່ານີ້ຈະເປັນພວກອະນຸລັກທີ່ສັງກັດໃນພັກເສລີປະຊາທິປະໄຕ ( LDP ).

## 6 . ກຸ່ມຕ່າງໆໃນພັກການເມືອງ　派閥（はばつ）

ຢູ່ຍີ່ປຸ່ນມີຄຳເວົ້າທີ່ວ່າ ຖ້າຄົນ 3 ຄົນມາຢູ່ຮ່ວມກັນຈະມີການແຕກກຸ່ມເກີດຂຶ້ນ ການແຕກກຸ່ມ ຄືການຫາສະມັກພັກພວກເພື່ອສະແວງຫາຜົນປະໂຫຍດຢ່າວໃດຢ່າງໜຶ່ງຮ່ວມກັນ ຊຶ່ງສ່ວນໃຫ່ຍກໍ່ຈະເປັນການຮວມກຸ່ມກັນຂອງຄົນທີ່ມີຖິ່ນກຳເນີດດຽວກັນ, ຈົບການສຶກສາຈາກສະຖາບັນແຫ່ງດຽວກັນຫຼືມີຄວາມສຳພັນທາງເຊື້ອສາຍຍາດຕິພີ່ນ້ອງກັນ ແຕ່ໃນປັດຈຸບັນ ການຮວມກຸ່ມແບເຊື້ອສາຍແລະຖິ່ນກຳເນີດດຽວກັນຈະນ້ອຍລົງກໍ່ຕາມ ແຕ່ການຮວມກຸ່ມຂອງກຸ່ມຄົນຈາກສະຖາບັນການສຶກສາແຫ່ງດຽວກັນນັ້ນຍັງຄົງເຫຼືອຄ້າງຢູ່ ຢ່າງເຊັ່ນ ລັດຖະກ່ອນຊັ້ນສູງ ສ່ວນໃຫ່ຍແລ້ວຈະເປັນຜູ້ຈົບການສຶກສາຈາກ ມະຫາວິທະຍາໄລ ໂຕກຽວ ຈຶ່ງມີຄົນລືກັນວ່າ ກະຊວງທະບວງກຸ່ມຕ່າງໆຖືກຍຶດຄອງໂດຍກຸ່ມ “ ໂທໄດ” ໝາຍເຖິງ ມະຫາໄລ ໂຕກຽວ ແຕ່ໃນປັດຈຸບັນຖ້າຫາກເວົ້າເຖິງກຸ່ມແລ້ວກໍມັກຈະໝາຍເຖິງກຸ່ມທາງການເມືອງໃນພັນ LDP.

## 7 . ລະບົບກຸ່ມພະນັກງານແກ່ນນຳ　官僚（かんりょう）

ທີ່ຍີ່ປຸ່ນໂດຍທົ່ວໄປແລ້ວ ເມື່ອກ່າວເຖິງແກນນຳກໍ່ຈະໝາຍເຖິງລັດຖະກອນຊັ້ນສູງໃນໜ່ວຍງານຕ່າງໆຂອງລັດຖະບານແລະຊຳນານການທາງການປົກຄອງ ( Technoerats ) ທີ່ຊອບເສງຜ່ານຂໍສອບຄັດເລືອກລັດຖະກ່ອນລະດັບເອກຫຼືຂໍສອບຄັດເລືອກນັກການທູດ.

### 1） ປະວັດຄວາມເປັນມາຂອງລະບົບພະນັນງານແກນນຳ　官僚の歴史（かんりょうのれきし）

ລະບົບລັດຖະກອນຂອງຍີ່ປຸ່ນມີມາແຕ່ບຸຮານເມື່ອ ພັນກ່ວາປີ ລາຊາສຳນັກ ຍະມະໂຕະ ໄດ້ນຳເອົາລະບອບການປົກຄອງຂອງປະເທດຈີນທີ່ຮຽກວ່າ “ ລະບົບລິດຈຶລຽວ “ (　律令　) ລະບົບປົກຄອງໂດຍກົດເກນທາງກົດໝາຍ ມາໃຊ້ ເມື່ອເວລາຜ່ານໄປລະບອບການປົກຄອງນີ້ກໍເລີ່ມເປັນຮູບຮ່າງຂຶ້ນ ພອ້ມໆກັນນັ້ນເອງລະບົບພະນັກງານແກນນຳກໍຄ່ອຍໆ ພັດທະນາຂຶ້ນມາ ໂດຍສະເພາະຢ່າງຍິ່ງໃນສະໄໝ ເອະໂດ
( ປີ 1615 - 1867)
ຕະລອດໄລຍະເວລາ 200 ປີກ່ວາເປັນຍຸກທີ່ບ້ານເມືອງສະງົບ ປະສະຈາກເສິກສົງຄາມ ຊົນຊັ້ນນັກລົບໄດ້ກາຍເປັນຜູ້ບໍລິຫານການປົກຄອງແລະລະບົບພະນັກງານແກ່ນນຳກໍໄດ້ຮັບການພັດທະນາຢ່າງເຕັມສ່ວນ ເມື່ອເຂົ້າສູ່ສະໄໝ ເມຈິ ຍີ່ປຸ່ນໄດ້ຕື່ນຕົວທີ່ຈະຮັບເອົາແນວຄິດແລະ ເທກໂນໂລຍີຂອງປະເທດຕາວັນຕົກເຂົ້າມາແລະພັດທະນາປະເທດໃຫ້ເປັນແບບສະໄໝໃໝ່ຢ່າງວ່ອງໄວ ໂດຍມີກຸ່ມແກນນຳ ເຊິ່ງມາຈາກຊົນຊັ້ນນັກລົບເປັນກຳລັງສຳຄັນ ພວກເຂົາເຫຼົ່ານັ້ນໄດ້ຍຶດເອົາລະບົບແກ່ນນຳທີ່ໃຊ້ຢູ່ເດີມມາເປັນຫຼັກ ແລ້ວນຳເອົາລະບົບການປົກຄອງແບບຕາວັນຕົກມາດັດສົມປະກອບໃຊ້ຢ່າງມີປະສິດຕິຜົນແລະຍັງໄດ້ກໍຕັ້ງມະຫາວິທະຍາໄລແຫ່ງຊາດ ເພື່ອສ້າງບຸກຄາລາກອນໃຫ້ແກ່ ໂດຍສະເພາະມະຫາໄລ ໂຕກຽວເຊິ່ງມີວັດຖຸປະສົງທີ່ຈະສ້າງລັດຖະກອນຊັ້ນສູງໃຫ້ກັບໜ່ວຍງານລັດຖະບານ ຈະເປັນທີຮ່ວມຂອງນັກສຶກສາເກ່ງໆ ຈາກທົ່ວປະເທດເຊິ່ງເຄົານິບທຳນຽມເຊັ່ນນີ້ຍັງຄົງເຫຼືອຄ້າງແລະປາກົດຢູ່ຈົນເຖິງເທົ່າທຸກວັນນີ້ ປັດຈຸບັນລັດຖະກອນໃນໜ່ວຍງານ

ຂອງລັດຖະບານສ່ວນໃຫ່ຍຈະຈົບການສຶກສາຈາກມະຫາວິທະຍາໄລ ໂຕກຽວ.

## 2） ຄວາມສຳເລດຂອງລະບົບພະນັກງານແກນນຳ　官僚制度(かんりょうせいど)の功績(こうせき)

ເມື່ອເອີ່ຍເຖິງລະບົບພະນັກງານແກນນຳບໍ່ວ່າໃນປະເທດໃດກໍຕາມມັກຈະມີພາບພົດທີ່ວ່າບໍ່ມີຄວາມຢືດຫົດ ຍຶດຕິດກັບກົດລະບຽບແລະເຢັນຊາ ຍີ່ປຸ່ນເອງກໍ່ບໍ່ມີຂໍ້ຍົກເວັ້ນຄຳທີ່ວ່າ (ລະບົບແບບພະນັກງານແກນນຳ) ຈະຖືກໃຊ້ໃນຄວາໝາຍດຽວກັບຄຳວ່າ “ເປັນພິທີຣີບຕອງ” ແລະ “ ການຄິດທີ່ວ່າຕົນຖືກສະເມີ” ແຕ່ລະບົບພະນັກງານແກນນຳຂອງຍີ່ປຸ່ນກໍ່ເປັນທີ່ຍອມຮັບວ່າມີປະສິດຕິພາບສູງ ຢ່າງເຊັ່ນໄລຍະຫຼັງນີ້ຍີ່ປຸ່ນສຶກສາກຳລັງເປັນທີ່ແພ່ຫຼາຍໃນໝູ່ນັກວິຊາການແລະນັກໜັງສືພິມຂອງຊາດຕາວັນຕົກ ແລະສິ່ງທີ່ພວກເຂົ້າຈະຕ້ອງກ່າວເຖິງເມື່ອເວົ້າເຖິງຄວາມເຄດລັບໃນ “ ຄວາມຮຸ່ງເຮືອງແລະການຈະເລີນເຕີບໂຕຢ່າງວອ່ງໄວຂອງຍີ່ປຸ່ນ “ ກໍ່ຄື ຜົນງານຂອງ ພະນັກງານແກນນຳ ແລະລະບົບລັດຖະກອນ

ຕໍ່ມາຫຼັງປີ 1990 ເປັນຕົ້ນມາເສດຖະກິດຂອງຍີ່ປຸ່ນເລີ່ມອ່ອນເພັຽຕົວລົງ ຖືກອາເມລິການຳໜ້າໄປແລະຍັງ ມີກຸ່ມປະເທດອາຊີຕາມຫຼັງມາຢ່າງຕິດໆ ເຮັດໃຫ້ເກີດມີສຽງຮຽກຮ້ອງໃຫ້ລັດແກ້ໄຂລະບຽບຜ່ອນຜັນກົດເກນຕ່າງໆ ກົດລະບຽບຂອງລັດດັ່ງກ່າວຖືກລະບຸວ່າເປັນສາເຫດທີ່ເຮັດໃຫ້ບໍ່ສາມາດສ້າງອຸສາຫະກຳແບບໃໝ່ເກີດຂຶ້ນມາໄດ້ ນອກຈາກນີ້ຍັງມີເຫດການຕ່າງໆ ເກີດຂຶ້ນຈາກການສຳພັນລະຫ່ວາງນັກທຸລະກິດກັບລັດຖະກອນແລະການ ສໍ້ລາດບັງລັດ ( ຄໍລັບຊັ່ນ) ເຊັ່ນການລົ້ມລະລາຍຂອງບໍລິສັດສິນເຊື່ອເພື່ອ ອະສັງຫາລິມະຊັບ ເນື່ອງຈາກຄວາມຜິດພາດໃນການຊີ້ນຳການບໍລິຫານຂອງກະຊວງການເງິນ ແລະຄວາມສຳພັນລະຫ່ວາງເຈົ້າໜ້າທີ່ລະດັບສູງໃນກະຊວງສາທາລະນະສຸກກັບບໍລິສັດຜະລິດຢາທີ່ນຳໄປສູ່ການຕິດເຊື້ອ ເອດຂອງຄົນເຈັບປ່ວຍທີ່ໄດ້ເພີ້ມເລືອດ ເຊີ່ງເຫດການເຫຼົ່ານີ້ມີສາເຫດເນື້ອງຈາກການໃຊ້ລະບຽບແລະອຳນາດຂອງລະບົບພະນັນງານແກນນຳ.
ເມື່ອເຂົ້າສູ່ ປີ 1996 ສຽງວິພາກວິຈານຕໍ່ລະບົບພະນັກງານແກນນຳນັ້ນເພີ່ມທະວີຮ້າຍແຮງຂຶ້ນ ຈາກບັນຫາຜະລິດຕະພັນຢາທີ່ມີເຊື້ອ ໂລກເອດ ເຮັດໃຫ້ຫົວໜ້າພະແນກຜູ້ກ່ຽວຂ້ອງໃນກະຊວງສາທາລະນະສຸກຖືກຈັບກຸມ ແລະຄວາມບໍ່ພໍໃຈຂອງປະຊາຊົນທີ່ມີຕໍ່ລະບົບພະນັກງານແກນນຳກໍເພີ່ມສູງຂື້ນຢ່າງເປັນປະວັດການ ຕອນການເລືອກຕັ້ງທົ່ວໄປໃນປີ 1996 ທຸກພັກການເມືອງຕ່າງໆກໍ່ປະກາດໃຫ້ສັນຍາວ່າຈະລົດຈຳນວນຂອງກະຊວງທະບວງທີ່ມີໃນໄລຍະນັ້ນ 21 ກະຊວງໃຫ້ເຫຼືອພຽງເຄິ່ງໜຶ່ງ ແລະຍັງໄດ້ວິຈານຂໍ້ເສັຽຂອງລະບົບການເມືອງໃນໄລຍະທີ່ຜ່ານມານັ້ນວ່າ ອຳນາດຫຼັກໃນການບໍລິຫານປະເທດນັ້ນຢູ່ທີ່ພະນັກງານແກນນຳນັ້ນດ້ວຍ.

# 8． ສະພາແຫ່ງຊາດຂອງປະເທດຍີ່ປຸ່ນ　日本(にほん)の国会

ໂຄງຮ່າງຕົ້ນຕໍຂອງການປົກຄອງ

ການແຍກອຳນາດ ເພື່ອປ້ອງກັນການນຳໃຊ້ (ສິດອຳນາດຂອງຊາດ) ໄປໃນທາງທີ່ຜິດ ຈື່ງມີການແຍງອຳນາດມອບໜ້າທີ່ໃຫ້ສະພາແຫ່ງຊາດເປັນອຳນາດນິຕິບັນຍັດ, ຄະນະລັດຖະບານ ເປັນອຳນາດບໍລິຫານ, ສານ ເປັນອຳນາດຕຸລາການ.

ມີລະບົບ ຄະນະລັດຖະມົນຕີ ໂດຍຄວາມໄວ້ວ່າງໃຈຈາກ ລັດຖະສະພາ, ການມີຫຼາຍພັກການເມືອງໃນສະພາ ( ບາງໄລຍະມີການລວມຕົວຂອງພັກການເມືອງຫຼາຍພັກເຂົ້າກັນ) ຕັ້ງຄະຂະລັດຖະບານປະຊຸມຂຶ້ນ ສະພາແຫ່ງຊາດ ແລະ ຄະນະລັດຖະບານຮ່ວມມືກັນ ບໍລິຫານພາລະວຽກງານຂອງຊາດ.

## 1） ພາລະບົດບາດຂອງສະພາແຫ່ງຊາດ_ 国会の役割

ສະພາແຫ່ງຊາດເປັນອົງການ ຕາງໜ້າປະຊາຊົນ ໃນລັດຖະທຳມະນູນຂອງຍີ່ປຸ່ນ ມີຂໍ້ບັນຍັດໄວ້ວ່າ ປະຊາຊົນຜູ້ເປັນເຈົ້າ ມອບໝາຍ ສິດແລະອຳນາດຂອງຕົນໃຫ້ແກ່ຜູ້ແທນ ຕາງໜ້າຕົນ ເປັນຜູ້ດຳເນີນປະຕິບັດໜ້າທີ່ວຽກງານຂອງຊາດ. ໂດຍນຳໃຊ້ລະບົບ " ຜູ້ແທນປະຊາຊົນ " ການນຳໃຊ້ດັ່ງກ່າວນີ້ ສະພາແຫ່ງຊາດຈຶ່ງເປັນອົງການທີ່ວ່າ ຕົວແທນແຫ່ງສິດເປັນເປັນເຈົ້າຂອງປະຊາຊົນ. ເປັນອົງການອຳນາດລັດສູງສຸດຂອງຊາດ ແລະເປັນອົງການນິຕິບັນຍັດແຫ່ງດຽວ ໃນການກໍ່ສ້າງຫຼືອອກກົດໝາຍຂອງຊາດນັ້ນຕ້ອງໄດ້ຜ່ານສະພາແຫ່ງຊາດທຸກຍາມ ( ຍົກເວັ້ນກໍລະນີພິເສດ ) ການກໍ່ສ້າງກົດໝາຍນັ້ນຈະບໍ່ມີອົງການຈັດຕັ້ງອື່ນໃດເຂົ້າຮ່ວມມື.
ເມື່ອສະພາແຫ່ງຊາດໄດ້ລົງມັດຕິຮັບຮອງເອົາແລ້ວກໍ່ເປັນກົດໝາຍທີ່ມີຄວາມສັກສິດໄດ້.

## 2） ອົງປະກອບຂອງສະພາແຫ່ງຊາດ 国会の構成

ສະພາແຫ່ງຊາດປະກອບດ້ວຍ ສະພາຕໍ່າ ແລະ ສະພາສູງ ແຕ່ລະສະພາຈະທີຜູ້ແທນຂອງປະຊາຊົນທີ່ໄດ້ຖືກເລືອກຕັ້ງຈາກປະຊາຊົນ ມີຈຳນວນທີ່ນັ່ງ ແລະ ອາຍຸການດັ່ງນີ້:
ສະພາຕໍ່າ ມີ 480 ທີ່ນັ່ງ ອາຍຸການ 4 ປີ (ຖ້າມີການຫຍຸບສະພາກ່ອນອາຍຸການກໍ່ໝາຍຄວາມວ່າໝົດອາຍຸການ)
ສະພາສູງ ມີ 242 ທີ່ນັ່ງ ອາຍຸການ 6 ປີ ( ຈະມີການດັດແປງຈຳນວນ ແຕ່ລະ 3 ປີ )
ມີຫ້ອງປະຊຸມໃຫ່ຍເປັນຫ້ອງປະຊຸມ ທັງໝົດຂອງສະມາຊິກສະພາທີ່ສັງກັດເຂົ້າຮ່ວມປະຊຸມລົງມັດຕິຕັດສິນແນວທາງຂອງແຕ່ລະສະພາ, ກ່ອນຈະມີການປະຊຸມໃຫ່ຍດັ່ງກ່າວນັ້ນໄດ້ມີການຈັດຕັ້ງການປະຊຸມຄະນະກຳມະການຂຶ້ນ,ເພື່ອເປັນການປະຊຸມແລະກວດກາສຳລອງກ່ອນຈະເຂົ້າໄປປະຊຸມພິຈາລະນາໃນຫ້ອງປະຊຸມໃຫ່ຍ.
ເພື່ອເອື້ອອຳນວຍໃຫ້ຜູ້ແທນປະຊາຊົນສາມາດປະຕິບັດໜ້າທີ່ຂອງຕົນໃຫ້ໄດ້ເຕັມສ່ວນ,ໄດ້ມີການຈັດຕັ້ງອົງການຜູ້ຊ່ວຍການເຄື່ອນໄຫວຂອງຜູ້ແທນປະຊາຊົນຂຶ້ນປະກອບດ້ວຍດັ່ງນີ້:
ຫ້ອງການເລຂາທິການ ສະພາຕໍ່າ ( ມີຈຳນວນພົນ 1,700 ຄົນ )
ຫ້ອງການເລຂາທິການ ສະພາສູງ ( ມີຈຳນວນພົນ 1,300 ຄົນ )
ຫໍສະມຸດສະພາແຫ່ງຊາດ ( ມີຈຳນວນພົນ 850 ຄົນ)
ກົມລະບົບກົດໝາຍ ສະພາຕໍ່າ 80 ຄົນ ສະພາສູງ 80 ຄົນ
ສ່ວນເລຂາຜູ້ແທນນັ້ນຜູ້ແທນຜູ້ໜຶ່ງ ມີເລຂາປະຈຳ 3 ຄົນ.

## 3） ໄລຍະຂອງການປະຕິບັດງານຂອງສະພາແຫ່ງຊາດ ( ໄລຍະເປີດປະຊຸມ) 活動期間

ສະພາແຫ່ງຊາດ ບໍ່ໄດ້ປະຕິບັດໜ້າທີ່ເປັນປະຈຳຕະລອດ, ໄດ້ມີການກຳນົດໄລຍະທີ່ມີປະສິດຕິພາບຂອງການເຄື່ອນໄຫວປະຕິບັດໜ້າທີ່, ໃນໄລຍະດັ່ງກ່າວນັ້ນ ຮຽກວ່າ ໄລຍະປະຊຸມ.
ທຸກໆປີ ມີການຮຽກປະຊຸມ ສາມັນຂຶ້ນ 「ປະຊຸມສາມັນ」ມີ 150 ວັນ ນອກນັ້ນອີງຕາມຄວາມຕ້ອງການມີການເປີດປະຊຸມ ວິສາມັນ 「ປະຊຸມວິສາມັນ 」ສະເລັ່ຽແລ້ວ ມີການເປີດປະຊຸມ 250 ວັນຕໍ່ປີ.

## 4） ສິດອຳນາດແລະຄວາມສາມາດຂອງສະພາແຫ່ງຊາດ. 国会の権限（権能）

ສະພາແຫ່ງຊາດເປັນອົງການກໍ່ສ້າງແລະລົງມັດຕິຕົກລົງເອົາ ກົດໝາຍ (ນິຕິບັນຍັດ) ການຮັບຮອງເອົາສົນທິສັນຍາ, ກວດກາງົບປະມານແຫ່ງລັດ. (ລົງມັດຕິຮັບເອົາງົບປະມານເປັນຕົ້ນ) ແລະການຊີ້ຕົວເອົາ ນາຍົກລັດ

ຖະມົນຕີຂອງຄະນະລັດຖະບານ.

### 5）ຂັ້ນຕອນຂອງການພິຈາລະນາຮ່າງຂອງການປະຊຸມສະພາ 議案の審議過程

ຮ່າງກົດໝາຍ, ຮ່າງງົບປະມານແຫ່ງລັດເປັນຕົ້ນ.

ຮູບແບບຂັ້ນຕອນ ການລົງມັດຕິຮັບເອົາມີດັ່ງນີ້ :

ກ) ມີການສະເໜີຮ່າງການປະຊຸມຈາກຜູ້ແທນ ຫຼືຄະນະລັດຖະບານ ຂຶ້ນມາເຖິງສະພາທີ່ກ່ຽວພັນ ຂອງສະພາໃດໜຶ່ງ. ( ຖ້າເປັນຮ່າງກ່ຽວກັບງົບປະມານແມ່ນໜ້າທີ່ຂອງສະພາຕໍ່າເທົ່ານັ້ນ)

ຂ) ປະທ່ານສະພາຈະສົ່ງຮ່າງສະເນີການປະຊຸມນັ້ນໃຫ້ຄະນະກໍາມະການທີ່ກ່ຽວຂ້ອງພິຈາລະນາ, ກ່ອນອື່ນໃດ ຄະນະກໍາມະການຈະສອບຖາມເຫດຜົນຂອງການສະເໜີ ຮ່າງປະຊຸມຈາກຜູ້ແທນ ຜູ້ສະເໜີຮ່າງຂຶ້ນມາ, ຖ້າຮ່າງປະຊຸມນັ້ນ ສະເໜີຂື້ນມາຈາກຄະນະລັດບານ ກໍ່ຈະສອບຖາມເຫດຜົນຈາກ ລັດຖະມົນຕີ ວ່າການ ການປົກຄອງ.

ຄ) ການໄຕ່ຖາມ ຄະນະກໍາມະການຈະໄຕ່ຖາມ ຂໍ້ຂ້ອງໃຈ ຈາກຜູ້ແທນ ຫຼື ລັດຖະມົນຕີ ທີ່ສະເໜີຮ່າງປະຊຸມຂຶ້ນມາໃນທີ່ປະຊຸມ.

ງ) ການໂຕ້ວາທີ ຜູ້ແທນແຕ່ລະພັກ ຕາງໜ້າພັກການເມືອງທີ່ສັງກັດ ຂຶ້ນມາສອບຖາມ, ອອກຄວາມເຫັນ ຕໍ່ຮ່າງສະເໜີດັ່ງກ່າວ ຈະຍິນດີ ຮັບຫຼືບໍ່ ດ້ວຍອາດອີງເຫດຜົນຢ່າງແຈ້ງຂາວ.

ຄະນະກໍາມະການຕົກລົງຕັດສິນ ໂດຍຜ່ານການ ລົງຂະແນນສຽງ, ຕໍ່ຈາກນັ້ນ ຮ່າງປະຊຸມດັ່ງກ່າວຈະນໍາສະເໜີຂຶ້ນໄປຫາ ຫ້ອງປະຊຸມໃຫ່ຍ, ປະທານຄະນະກໍາມະການກ່ຽວຂ້ອງ ກໍ່ຈະລາຍງານ ຜົນຂອງການກວດກາ ແລະສອບຖ້າທີ່ຜ່ານມາ ຕໍ່ທີ່ປະຊຸມ. ຄະນະຜູ້ແທນ ຕົກລົງຕັດສິນ ໂດຍຜ່ານການລົງຂະແນນສຽງ, ໃນກໍລະນີ ມີການລົງຂະແນນສຽງສ່ວນຫຼາຍຮັບເອົາ, ກໍ່ຈະສົ່ງຮ່າງນັ້ນຂຶ້ນໄປຫາ ສະພາຂັ້ນເທິງ.

ສະພາຂັ້ນເທິງກໍ່ຈະມີການປະຊຸມພິຈາລະນາຮ່າງໜັນ ດ້ວຍຂັ້ນຕອນແລະວິທີດຽວກັນ, ຖ້າຫາກສະພາຂັ້ນເທິງນັ້ນ ກໍ່ຮັບເອົາແລ້ວ ກໍ່ໝາຍຄວາມວ່າ ກົດໝາຍ, ຫຼື ງົບປະມານນັ້ນໆ ກໍ່ມີຜົນຫຼືຄວາມສັກສິດ.

## 9．ສານ 裁判

ລະບົບສານຂອງປະເທດຍີ່ປຸ່ນກໍ່ເປັນສິ່ງໜຶ່ງທີ່ມີການປ່ຽນແປງຫຼາຍທີ່ສຸດຫຼັງສົງຄາມໂລກຄັ້ງທີ່ 2 ກ່ອນສົງຄາມຍີ່ປຸ່ນໃຊ້ລະບົບສານຈັກະພັດ ແຕ່ພາຍຫຼັງສົງຄາມໄດ້ປ່ຽນໄປເປັນສານປະຊາຊົນ ຫຼື (ອໍານາດຕຸລາການ) ເຊິ່ງເປັນ 1 ໃນ 3 ອໍານາດຫຼັກຮ່ວມກັບອໍານາດບໍລິຫານແລະອໍານາດນິຕິບັນຍັດ.

ໃນປາງກ່ອນສົງຄາມໂລກ ຄັ້ງທີ່ 2 ລະບົບສານຂອງປະເທດຍີ່ປຸ່ນໄດ້ຮັບອິດທິພົນຢ່າງຫຼວງຫຼາຍຈາກກົດໝາຍຂອງເຢລະມັນ ແຕ່ພາຍຫຼັງສົງຄາມໄດ້ນໍາເອົາລະບົບ ແອງໂກ ອາເມລິການມາໃຊ້, ໃນປີ2007ຜ່ານມາໄດ້ນໍາເອົາລະບົບລູກຂຸນສານ (ລະບົບທີ່ຊີ້ຕົວເອົາຄົນທົ່ວໄປຂຶ້ນມາຊ່ວຍສານໃນການຕັດສິນຄະດີ) ມາໃຊ້.

### 1）ໂຄງສ້າງຂອງລະບົບສານ 司法の組織

ລະບົບສານປະກອບດ້ວຍ ສານສູງສຸດ , ສານສູງ, ສານທ້ອງຖິ່ນ(ສານແຂວງ), ສານຄອບຄົວ,ແລະສານງ່າຍດ່າຍ ການຕັດສິນຄະດີຈະມີ 3 ຄັ້ງ ຄື ຄັ້ງທີ່ໜຶ່ງ ທີ່ສານທ້ອງຖິ່ນ ຄັ້ງທີ່ 2 ທີ່ສານສູງ ຄັ້ງທີ່ 3 ທີ່ສານສູງສຸດ, ສານຄອບຄົວຈະມີການພິຈະລະນາຄະດີກ່ຽວກັບ ການຢ່າຮ້າງ ສ່ວນສານງ່າຍດາຍນັ້ນເປັນໜ່ວຍງານທີ່ຂື້ນກັບ

ສານທ້ອງຖິ່ນມີໜ້າທີ່ພິຈາລະນາຄະດີເບົາ ຢ່າງເຊັ່ນ ການລະເມີດກົດຈາລະຈອນແລະໂທດທີ່ເບົາເປັນຕົ້ນ.

ສານສູງສຸດເປັນສານແຫ່ງດຽວແລະສຸດຍອດຂອງລະບົບສານ ຊຶ່ງໄດ້ຕັ້ງຂຶ້ນຕາມບົບບັນຍັດຂອງລັດຖະທຳມະນູນ. ສານສູງສຸດມີປະທານສານ 1 ຄົນແລະປະກອບດ້ວຍຜູ້ພິພາກສາ 14 ຄົນ, ປະທານສານສູງສຸດແລະຜູ້ພິພາກສາ 14 ຄົນແມ່ນຖືກແຕ່ງຕັ້ງຂຶ້ນໂດຍຄະນະ ລັດຖະມົນຕີແລະຖືກຮັບຮອງເອົາຈາກ ເຈົ້າຈັກກະພັດ.

ວິທີການພິຈາລະນາຄະດີຂອງສານສູງສຸດຈະແບ່ງອອກເປັນ ການພິຈາລະນາຄະດີ ໂດຍ ຄະນະຜູ້ພິພາກຄະນະໃຫ່ຍທີ່ໃຊ້ຜູ້ພິພາກສາທັ້ງໝົດຄະນະ ແລະ ການພິພາກຄະດີ ໂດຍ ຄະນະຜູ້ພິພາກສາ ຄະນະນ້ອຍ ມີຜູ້ພິພາກສາ 5 ຄົນ ແລະແບບອອກເປັນ 3 ຄະນະ.

ສານສູງສຸດມີອຳນາດພິຈາລະນາແລະຕັດສິນຄະດີທີ່ອຸທອນຂຶ້ນມາຕາມຂັ້ນຕອນຂອງກົດເກນການຟ້ອງຮ້ອງຫຼືອຸທອນແບບພິເສດ, ນອນນັ້ນຍັງມີອຳນາດພິຈາລະນາຄະດີ ຂອງພະນັກງານສານ ເລີ້ມແຕ່ຂັ້ນຕົ້ນຮອດຂັ້ນສຸດທ້າຍອີກດ້ວຍ, ເຫດຜົນຂອງການອຸທອນນັ້ນນັ້ນຕອ້ງແມ່ນ ຄະດີແພ່ງແລະຄະດີກ່ຽວກັບການບໍລິຫານຂອງລັດ, ທີ່ຮູ້ແຈ້ງຂາວວ່າຖືກຕັດສິນພິດກົດໝາຍ,ພິດກັບກົດຂອງລັດຖະທຳມະນູນ ແລະອາດຈະມີຜົນກະທົບເຖິງການຕັດສິນຂອງສານເທົ່ານັ້ນ. ສ່ວນຄະດີອາຍານັ້ນແມ່ນ ຄະດີທີ່ຖືກຕັດສິນພິດກັບກົດຂອງລັດຖະທຳມານູນຫຼື ມີການຕັດສິນແຕກຕ່າງກັບການຕັດສິນທີ່ເຄີຍມີມາກ່ອນເທົ່ານັ້ນ.

ຕາມຂັ້ນຕອນຂອງກົດໝາຍການຮ້ອງຟ້ອງທີ່ວ່າ ການອຸທອນແບບພິເສດນັ້ນໝາຍເຖິງການອຸທອນຂອງຄະດີແພ່ງທີ່ມີການຕັດສິນພິດກັບກົດຂອງລັດຖະທຳມະນູນ, ສ່ວນຄະດີອາຍາແລະຄະດີຜູ້ເຍົາໄວນັ້ນເພື່ອຮັກສາຜົນສັກສິດຂອງກົດໝາຍດັ່ງກ່າວ ຖ້າເຫັນວ່າການຕັດສິນນັ້ນພິດກັບກົດຂອງລັດຖະທຳມະນູນ ຫຼື ຕ່າງກັນກັບການຕັດສິນທີ່ເຄີຍມີມາກ່ອນແລ້ວນັ້ນ ນັບວ່າເປັນເຫດຜົນຂອງການອຸທອນໄດ້.

ສານສູງສົດເປັນສານແຫ່ງດຽວເທົ່ານັ້ນທີ່ເປັນໜ່ວຍງານສູງສຸດໃນອຳນາດຕຸລາການແລະສິດຕັດສິນ ອີກດ້ານໜຶ່ງລັດຖະທຳມະນູນຍັງບົ່ງໄວ້ວ່າເພື່ອການຮັກສາຄວາມເປັນເອກະລາດ ອັນແທ້ຈິງຂອງອຳນາດຕຸລະການຈຶ່ງມີການຈັດຕັ້ງມອບໝາຍໜ້າທີ່ ວຽກງານດັ່ງຕໍ່ລົງໄປນີ້ໃຫ້ແກ້ສານສູງສຸດປັນເສນາທິການ ປະຕິບັດແລະບໍລິຫານ, ການຈັດສັນເອກະສານໃນການຮ້ອງຟ້ອງ, ທະນາຍຄວາມ, ອອກກົດລະບຽບວິໃນພາຍໃນສານແລະມີສິດອອກລະບຽມກົດເກນວິທີການຈັດສັນເອກະສານຕ່າງໆທາງດ້ານຕຸລາການ ພ້ອມທັງອອກຄຳສັ່ງການແຕ່ງຕັ້ງຜູ້ພິພາກສາແລະພະນັກງານຫຼືຜູ້ຊ່ວຍພະນັກງານສານຂັ້ນລຸ່ມອີກດ້ວຍ, ພ້ອມກັນນັ້ນສານສູງສຸດກໍ່ເປັນໜ່ວຍງານຮັກສາງົບປະມານແລະວຽກງານອື່ນໆທີ່ຕິດພັນກັບສິດອຳນາດລັດຖະການດ້ານຕຸລາການ.

ເພື່ອການປະຕິບັດສິດອຳນາດດັ່ງກ່າວນັ້ນ ໄດ້ມີການຈັດຕັ້ງໜ່ວຍງານສາທິດເຄືອຄ່າຍຂຶ້ນຄື: ສູນການຈັດສັນເອກະສານສັງລວມຮອບດ້ານ, ສູນອົບຮົມນັກຕຸລາການ,ສູນອົບຮົມສະມຽນສານ,ສູນອົບຮົມພະນັກງານກວດກາຂອງສານຄອບຄົວແລະການຕັ້ງຫໍສະມຸດຂອງສານສຸງສຸດ. ເພື່ອເປັນການລົກລຽງຈາກການກີດກັ້ນແລະການແສກແຊງຂອງອຳນາດ ບໍລິຫານ ( ອົງການລັດຖະບານ) ແລະອຳນານນິຕິບັນຍັດ (ສະພາແຫ່ງຊາດ) ສານສູງສຸດມີເອກະລາດຂອງຕົນໃນການປະຕິບັດແລະບໍລິຫານໜ່ວຍງານທັ້ງໝົດດັ່ງກ່າວ.



↑

ດອກ ສະກຸລະ ດອກໄມ້ປະຈຳຊາດຍີ່ປຸ່ນ



↑

ພູເຂົາໄຟ ພູຈີ ເປັນພູເຂົາທີ່ຄົນຍີ່ປຸ່ນຮັກຫອມ

## 2） ຫ້ອງວ່າການສານ ,ທະບວງໄອຍະການ,ສະມາຄົມທະນາຍຄວາມ

### 裁判所、検察庁、弁護士協会

ອຳນາດນິຕິບັນຍັດ
ສະພາແຫ່ງຊາດ

ແບບອອກເປັນ
3 ອຳນາດປົກຄອງ

ອຳນາດບໍລິຫານ
ຄະນະລັດຖະບານ

ອຳນາດຕຸລາການ
ສານ

ລັດຖະມົນຕີ ກະຊວງຍຸດຕິທຳ

( ມີຂອບເຂດຈຳກັດໃນການບັນຊາ ( ໄອຍະການເປັນເອກະລາດ )

ທະບວງອະທິໄອຍະການ

ທະບວງໄອຍະການຂັ້ນສູງ 8 ແຫ່ງ

ທະບວງໄອຍະການຂັ້ນລຸ່ມ

ທະບວງໄອຍະການເຂດ 438 ແຫ່ງ

ສານສູງສຸດ

ສານສູງ 8 ແຫ່ງ

ສານທ້ອງຖິ່ນ 50 ແຫ່ງ
ສານຄອບຄົວ 50 ແຫ່ງ

ສານງ່າຍດາຍ 438 ແຫ່ງ

ສະຫະພັນສະມາຄົມທະນາຍຄວາມ
ສະມາຄົມທະນາຍຄວາມ 52 ແຫ່ງ

* ນອກນັ້ນຍັງມີ ໜ່ວຍຈັດຕັ້ງຂອງທ້ອງຖິ່ນ

## １０．ລະບົບພາສີ　税制（ぜいせい）

### １）ການເລີ່ມຈັດເກັບພາສີຜູ້ບໍລິໂພກ ( ພາສີຊົມໃຊ້ )　消費税の投入

ໂຄງສ້າງທາງພາສີຂອງຍີ່ປຸ່ນປະກອບການຈັດເກັບພາສີທາງກົງຢ່າງເຊັ່ນ ພາສີລາຍໄດ້ສ່ວນບຸກຄົນ ແລະພາສີນິຕິບຸກຄົນ (ບໍລິສັດ) ເປັນຫຼັກ ນອກຈາກນີ້ຍັງມີການຈັດເກັບພາສີທາງອອມເຊັ່ນ ພາສີນ້ຳມັນເຊື້ອໄຟ,ພາສີເຫຼົ້າ,ພາສີສຸນລະກາກອນ ( ພາສີນຳເຂົ້າແລະສົ່ງອອກສິນຄ້າ) ເປັນຕົ້ນ.
ການຈັດເກັບພາສີນຜູ້ບໍລິໂພກເພີ່ມນີ້ເລີ່ມແຕ່ປີ 1989 ໃນອັດຕາຕ່ຳຄືພຽງ 3% ແມ່ນຈະມີການປັບຂຶ້ນເປັນ 5%ໃນເດືອນ ເມສາ ປີ 1997ກໍ່ຕາມແຕ່ກໍ່ຍັງຈັດວ່າເປັນອັດຕາທີ່ຕ່ຳຖ້າປຽບທຽບກັບກຸ່ມປະເທດແຖມຢຸໂລບ ແລະຈະມີການປັດຂຶ້ນອີກ ເປັນ 8% ຫາ 10%ໃນປີ 2015ນີ້.

ການທີ່ໂຄງສ້າງທາງພາສີຂອງຍີ່ປຸ່ນປະກອບຂຶ້ນດ້ວຍພາສີທາງກົງເປັນຫຼັກນັ້ນ ນອກຈາກຈະເປັນເພາະໂຄງສ້າງພາສີແຕ່ດັ້ງເດີມແລ້ວ ຍັງເປັນຜົນເນື່ອງມາຈາກການປະຕິຮູບໂຄງສ້າງທາງພາສີ ໃນໄລຍະຍຶດຄອງຫຼັງສົງຄາມພາຍໃຕ້ການນຳຂອງສາຫະລັດອາເມລິກາຊຶ່ງມີພາສີທາງກົງເປັນໂຄງສ້າງຫຼັກເຊັ່ນກັນ ຫຼັກການຂັ້ນພື້ນຖານຂອງລະບົບການຈັດເກັບພາສີ ກໍຄື 「 ຄວາມຍຸຕິທັມແລະສະເໝີພາບ 」ແລະໃຊ້ວິທີຈັດເກັບໂດຍການແຈ້ງຈ່າຍພາສີເອງເປັນຫຼັກ ແຕ່ໃນກໍລະນີຂອງຍີ່ປຸ່ນ ສ່ວນໃຫ່ຍຈະໃຊ້ລະບົບ ຈັດເກັບຕົ້ນທາງຊຶ່ງເປັນການງາຍໃນການເກັບ ລະບົບນີ້ຈະເປັນການຫັກພາສີລາຍໄດ້ຈາກເງິນເດືອນແຕ່ລະເດືອນຂອງພະນັກງານບໍລິສັດແລະຜູ້ໃຊ້ແຮງງານອື່ນໆ ຈິ່ງສາມາດເກັບໄດ້ເກືອບ 100%.

ສ່ວນຜູ້ດຳເນີນທຸລະກິດສ່ວນຕົວຈະໃຊ້ລະບົບການແຈ້ງພາສີເອງ ຊຶ່ງບາງຄົນກໍ່ບໍ່ຍອມແຈ້ງພາສີ ນອກຈາກນັ້ນແລ້ວການແຈ້ງລາຍລະອຽດຕ່າງໆຂອງລາຍຈ່າຍທີ່ຈຳເປັນໃນການດຳເນີນທຸລະກິດນັ້ນຂຶ້ນກັບຄວາມຊື່ສັດຂອງຜູ້ເສຍພາສີ ຈຶ່ງເຮັດໃຫ້ການຈັດເກັບພາສີໃນກໍລະນີຂອງຜູ້ດຳເນີນທຸລະກິດສ່ວນຕົວນີ້ບໍ່ໄດ້ເຕັມສ່ວນເກັບໄດ້ພຽງເຄິ່ງດຽວ, ສ່ວນພາກຊາວກະສິກຳນັ້ນເກັບໄດ້ພຽງ30%ຈຶ່ງກາຍເປັນສັນຍານາມວ່າການຈັດເກັບພາສີທີ່ບໍ່ຍຸດຕິທຳ. ນອກເໜືອຈາກເຫດຜົນດັ່ງກ່າວແລ້ວກໍ່ຍ້ອນມາຈາກການໃຊ້ລະບົບເກັບພາສີແບບຂັ້ນບັນໄດ ຜູ້ມີລາຍໄດ້ຫຼາຍອັດຕາພາສີກໍ່ຈະສູງ. ການເກັບພາສີໄດ້ນ້ອຍລົງຂອງລັດນອກຈາກເຫດຜົນຂ້າງເທິງນັ້ນແລ້ວກໍ່ເນື່ອງມາຈາກສະພາບຂອງເສດທະກິດຖອຍລົງຈາກວິກິດການດ້ານນ້ຳມັນເຊື້ອໄຟຄັ້ງທີ່ 1 ໃນປີ 1973 ຕະລອດເຖິງການຂະຫຍາຍຕົວຂອງລາຍຈ່າຍພາກລັດທີ່ໃຊ້ຟື້ນຟູເສດທະກິດ ເຮັດໃຫ້ການຂາດດຸນງົບປະມານກາຍເປັນບັນຫາທີ່ເຮື້ອຮັງ.

<u>ການຂາດດຸນງົບປະມານຢ່າງໜັກ</u>

ໃນໄລຍະ20ປີມານີ້ ລາຍຮັບຈາກພາສີໂດຍສະເລຍແລ້ວຄິດເປັນພຽງ 76% ຂອງລາຍໄດ້ທັງໝົດຂອງລັດດ້ວຍເຫດນີ້ ຈຶ່ງມີການອອກພັນທະບັດຂອງລັດຖະບານເພີ່ມຫຼາຍຂຶ້ນເພື່ອທົດແທນລາຍໄດ້ ຍອດໜີ້ສະສົມຈາກການອອກພັນທະບັດລັດຖະບານຕອນປີ 1996 ມີເຖິງ 250 ລ້ານລ້ານເຢັນ ຖ້າລວມເອົາພັນທະບັດທີ່ອອກໂດຍໜ່ວຍງານບໍລິຫານສ່ວນທ້ອງຖິ່ນແລ້ວ ເງິນກູ້ພາກລັດໂດຍລວມຂອງຍີ່ປຸ່ນຈະສູງເຖິງ 400 ລ້ານລ້ານເຢັນໃນປີນັ້ນ ປະມານເກີນ 20% ຂອງງົບປະມານລາຍຈ່າຍຂອງປະເທດ ຈະເປັນເປັນລາຍຈ່າຍກ່ຽວກັບພັນທະລັດຂອງລັດຖະບານ ຢ່າງເຊັ່ນຄ່າດອກເບັ້ຍພັນທະບັດເຮັດໃຫ້ຖານະທາງການຄັງເລີ່ມຝືດເຄືອງ ລາຍຈ່າຍສຳຫຼັບໂຄງການໃໝ່ໆກໍຄ່ອຍໆລົດນ້ອຍລົງ ອີກທັງຄ່າໃຊ້ຈ່າຍດ້ານສະວັດດີການສັງຄົມຢ່າງເຊັ່ນ ການຮັກສາພະຍາບານ ເງິນບຳນານກໍ່ເພີ່ມຂຶ້ນ ເຮັດໃຫ້ຖະນະທາງການຄັງຂອງຍີ່ປຸ່ນ

ລຸດລົງທຸກປີ. ( ປີ 2012ເດືອນ11ປັດຈຸບັນ ໜີ້ສິນຂອງລັດ ມີຫຼາຍເພີ້ມຂື້ນເຖິງ 983 ລ້ານລ້ານເຢັນ )
ສະນັ້ນລັດຖະບານຊຸດທີ່ຜ່ານໆມາຈື່ງໄດ້ເພີ້ມອັດຕາພາສີທາງອ້ອມເພື່ອທີ່ຈະເຮັດໃຫ້ຖານະທາງການຄັງໝັ້ນຄົງຍິ່ງຂຶ້ນພ້ອມກັນນັ້ນກໍໄດ້ນຳເອົາລະບົບພາສີຜູ້ບໍລິໂພກມາໃຊ້ ເພື່ອປະກັນລາຍໄດ້ສຳຫຼັບໃຊ້ຈ່າຍດ້ານສະວັດດີການສັງຄົມ ເຮັດໃຫ້ປະຊາຊົນເກີດຄວາມບໍ່ພໍໃຈ ພັກຝ່າຍລັດຖະບານໃນເວລານັ້ນຈື່ງຕົກຕັ່ງ ລຳບາກໃນການຫາສຽງເລືອກຕັ້ງ ໃນການເລືອກຕັ້ງທົ່ວປະເທດໃນປີ 1996 ກໍຄືກັນ ການຂື້ນພາສີຈາກ 3% ມາເປັນ 5% ໄດ້ກາຍເປັນຫົວຂໍ້ໃຫ່ຍໃນການແຂ່ງຂັງຫາສຽງສະນັບສະນູນ ແຕ່ທ້າຍສຸດພັກ ເສລີປະຊາທິປະໄຕ ( LDP) ໄດ້ຊະນະ ພາສີກໍ່ຖືກຂື້ນເປັນ 5% ຕັ້ງແຕ່ເດືອນ ເມສາ ປີ 1997. ຢ່າງໄດ້ກໍ່ດີ ເມື່ອຄິດເຖິງສະພາບສັງຄົມທີ່ຈະມີຜູ້ສູງອາຍຸຈຳນວນຫຼວງຫຼ້າຍໃນອານາຄຸດແລ້ວ ການຈັດຫາລາຍໄດ້ກໍບໍ່ມີທາງອື່ນນອກຈາກຂື້ນພາສີຜູ້ບໍລິໂພກ ປີ 2014 ຈະຂື້ນເປັນ 8% ແລະຈະຂື້ນອີກເປັນ 10%ໃນປີ2015ຕໍ່ໄປ. ກໍ່ຖືກຕໍ່ຕ້ານຈະປະຊາຊົນຢ່າງລຶກລັ່ງບໍ່ໄດ້ ການປະຕິຮູບລະບົບພາສີໄດ້ກາຍເປັນບັນຫາສຳຄັນທາງການເມືອງຂອງຍີ່ປຸ່ນເຊັ່ນດຽວກັນກັບການປະຕິຮູບລະບົບການປົກຄອງ.

## １１. ນະໂຍບາຍຕ່າງປະເທດ　外交（がいこう）

ນະໂຍບາຍຕ່າງປະເທດຂອງຍີ່ປຸ່ນພາຍຫຼັງສົງຄາມໂລກ ເລີ້ມຕົ້ນຢ່າງຮ້າວຫັນນັບແຕ່ການລົງນາມໃນສົນທິສັນຍາສັນຕິພາບ ຊານຟັນຊິດຊະໂກໃນປີ 1951 ໃນການເຮັດສົນທິສັນຍາສັນຕິພາບນັ້ນໄດ້ເກີດຄວາມຂັດແຍ້ງກັນຢ່າງແຮງລະຫວ່າງຝ່າຍທີ່ຕ້ອງການໃຫ້ເຮັດສົນທິສັນຍາສັນຕິພາບກັບປະເທດຕ່າງໆ ທີ່ກ່ຽວຂ້ອງທັງໝົດລວມທັງປະເທດ ໂຊວຽດດ້ວຍກັບຝ່າຍທີ່ຕ້ອງການເຮັດສົນທິສັນຍາສັນຕິພາບກັບປະເທດບາງສ່ວນ ຄື ສະຫະລັດອາເມລິການແລະຍຸໂລບກ່ອນ ຄວາມຄິດເຫັນກໍແຕກອອກເປັນ 2 ຝ່າຍ ລັດຖະບານຂອງທ່ານໂຢະສິດະ ໃນສະໄມນັ້ນໄດ້ເລືອກເອົາ ຈະລົງນາມໃນສົນທິສັນຍາສັນຕິພາບກັບປະເທດບາງສ່ວນກ່ອນດ້ວຍເຫດນີ້ຈື່ງກາຍເປັນຈຸດເລີ້ມຂອງນະໂຍບາຍຕ່າງປະເທດຂອງຍີ່ປຸ່ນມາເຖິງປັດຈຸບັນ ກໍ່ຄືຄວາມສັມພັນກັບຕ່າງປະເທດຂອງຍີ່ປຸ່ນຕັ້ງຢູ່ບົນພື້ນຖານຂອງມິດຕະພາບລະຫວ່າງຍີ່ປຸ່ນກັບອາເມລິກາ ແລະດຳເນີນຄວາມສັມພັນກັບຕ່າງປະເທດໂດຍມຸ້ງຫວັງຈະປະສານງານຄວາມຮ່ວມມືກັບຊາດຕາວັນຕົກຊື່ງປົກຄອງໃນລະບອບປະຊາທິປະໄຕ.

<u>ຄວາມສັມພັນລະຫວ່າງຍີ່ປຸ່ນກັບສະຫະລັດອາເມລິກາ</u>

ມາເຖິງປັດຈຸບັນຄວາມສັມພັນລະຫວ່າງຍີ່ປຸ່ນແລະອາເມລິກາດຳເນີນມາດ້ວຍດີບໍ່ມີບັນຫາຮ້າຍແຮງ ແຕ່ໃນໄລຍະຫຼັງນີ້ໄດ້ເກີດການກະທົບກະເທືອນກັນຂື້ນ ຈາກຄວາມຂັດແຍ້ງທາງການຄ້າໂດຍສະເພາະດ້ານອຸສາຫະກັມລົດຍົນ ເຫຼັກ ແລະຜະລິດຕະພັນກະເສດ ເນື່ອງຈາກອາເມລິກາຂາດດຸນການຄ້າຕໍ່ຍີ່ປຸ່ນເພີ້ມຫຼາຍຂື້ນ ນອກຈາກນີ້ຍັງເກີດບັນຫາດ້ານການປ້ອງກັນປະເທດເນື້ອງຈາກການເພີ້ມສັມມັນຕະພາບໃນການປ້ອງກັນຂອງຍີ່ປຸ່ນບໍ່ໄດ້ດຳເນີນໄປຕາມຄວາມປະສົງຂອງອາເມລິກາ ຢ່າງໃດກໍ່ດີໃນດ້ານຄວາມສັມພັນກັບຕ່າງປະເທດ ຍີ່ປຸ່ນໃຫ້ຄວາມສຳຄັນຕໍ່ອາເມລິກາຫຼາຍທີ່ສຸດ ໃນປຶ້ມໜ້າປົກສີຂຽວທີ່ພິມອອກທຸກປີກ່ຽວກັບນະໂຍບາຍຕ່າງປະເທດທີ່ລັດຖະບານປະກາດອອກໄດ້ມີການເນັ້ນຍ້ຳວ່າ ມິດຕະພາບແລະຄວາມຮ່ວມມືກັບອາເມລິການຊື່ງຕັ້ງຢູ່ບົນພື້ນຖານຂອງສົນທິສັນຍາຄວາມມັ່ນຄົງຍີ່ປຸ່ນ-ອະເມລິກາ ຖືວ່າເປັນຫຼັກສຳຄັນຂອງນະໂຍບາຍຕ່າງປະເທດຂອງຍີ່ປຸ່ນ ອາເມລິກາເປັນພັນທະມິດທີ່ສຳຄັນຂອງຍີ່ປຸ່ນໃຮຫຼ້າຍໆດ້ານ ທັ້ງດ້ານການເມືອງ ເສດຖະກິດ ການປ້ອງກັນປະເທດແລະອື່ນໆ.

ຄວາມສັມພັນກັບປະເທດຕ່າງໆໃນເອເຊຍ

ນອກຈາກຄວາມສັມພັນກັບອາເມລິກາແລ້ວຍີ່ປຸ່ນຍັງໃຫ້ຄວາມສຳຄັນກັບເກົາລີໄຕ້ ຈີນແລະກຸ່ມປະເທດອາຊຽນດ້ວຍ ກັບເກົາລີໄຕ້ນັ້ນ ເຖິງຈະເປັນປະເທດເພື່ອນບານ ແຕ່ກໍ່ບໍໄດ້ໝາຍຄວາມວ່າຄວາມສັມພັນທາງການທູດຈະລາບລື່ນຢູ່ສະເມີ ດ້ວຍເຫດນີ້ຍີ່ປຸ່ນຈຶ່ງພະຍາຍາມທີ່ຈະຮັກສາສັມພັນຕະພາບອັນດີຕໍ່ກຸ່ມປະເທດເຫຼົ່ານີ້ເອົາໄວ້ໂດຍນາຍຍົກລັດຖະມົນຕີຂອງຍີ່ປຸ່ນໃນລະຫວ່າງທີ່ດຳລົງຕຳແໜ່ງຢູ່ຈະຕ້ອງເດີນທາງໄປຢ້ຽມຢາມເກົາລີໄຕ ຈີນ ແລະກຸ່ມປະເທດອາຊຽນ.

ຄວາມສັມພັນລະຫວ່າງຍີ່ປຸ່ນແລະລັດເຊຍ

ສຳຫຼັບຄວາມສັມພັນລະຫວ່າງຍີ່ປຸ່ນແລະລັດເຊຍນັ້ນ ຍັງບໍ່ໄດ້ມີການລົງນາມໃນສົນທິສັນຍາສັນຕິພາບເນື່ອງຈາກຍັງຄົງມີບັນຫາກ່ຽວກັບດິນແດນດ້ານເໜືອແຖມເກາະ ຄຸນະຊິລິ (kunashiri) ເອະໂຕະໂລະຟຸ (Etorofu) ຮະໂບະມະອິ ( Habomais) ຊິໂຄຕັນ ( Shikotan) ຊຶ່ງທາງຍີ່ປຸ່ນມີນະໂຍບາຍທີ່ຈະບໍ່ເລີກລົ້ມຄວາມຕັ້ງໃຈທີ່ຈະຮຽກຮ້ອງກັມະສິດໃນດິນແດນດ້ານເໜືອຄືນມາ ແຕ່ກໍ່ຍັງຮັກສາຄວາມສັມພັນທາງເສດຖະກິດແລະວັດທະນະທັມເອົາໄວ້.

ສະຫະປະຊາຊາດ

ເສົາຫຼັກອັນໜຶ່ງຂອງນະໂຍບາຍການທູດຂອງຍີ່ປຸ່ນກໍຄືນະໂຍບາຍກ່ຽວກັບສະຫະປະຊາຊາດ ເງິນສະນັບສະນຸນທີ່ຍີ່ປຸ່ນຈ່າຍໃຫ້ກັບສະຫະປະຊາຊາດຄິດເປັນຈຳນວນຫຼາຍກ່ວາຫຼາຍໆປະເທດທີ່ເປັນສະມາຊິກປະຈຳຂອງສະພາຄວາມມັ່ງຄົງ ຈາກເຫດຜົນດັ່ງກ່າວນີ້ ຍີ່ປຸ່ນຈຶ່ງຕ້ອງການເຂົ້າເປັນສະມາຊິກປະຈຳ ແຕ່ໃນປະເທດຍີ່ປຸ່ນກໍມີຄວາມຄິດເຫັນໃນແງ່ແບ່ງຮັບແບ່ງສູ້ວ່າ ( ຖ້າຫາກຍີ່ປຸ່ນໄດ້ເຂົ້າເປັນສະມາຊິກປະຈຳຂອງສະພາຄວາມມັ່ນຄົງແລ້ວ ກໍ່ຈະຕ້ອງແບກພາລະການສົ່ງກຳລັງທະຫານໄປຍັງຕ່າງປະເທດ ) ຢ່າງໃດກໍ່ດີຄວາມຄິດເຫັນຂອງປະຊາຊົນຊາວຍີ່ປຸ່ນສ່ວນໃຫ່ຍກໍ່ຕ້ອງການຈະໃຫ້ຍີ່ປຸ່ນເຂົ້າເປັນສະມາຊິກປະຈຳ.

## １２. ການປ້ອງກັນປະເທດ 防衛(ぼうえい)

ການປ້ອງກັນປະເທດແບບຕັ້ງຮັບແລະສົນທິສັນຍາຄວາມໝັ້ນຄົງ

ນະໂຍບາຍການປ້ອງກັນປະເທດຂອງຍີ່ປຸ່ນມີຂໍ້ຈຳກັດຫຼາຍເມື່ອທຽບກັບປະເທດອື່ນໆ ເນື່ອງຈາກວ່າໃນລັດທະທຳມະນູນມັດຕາ 9 ມີຂໍ້ກຳໜົດກັບການສະລະສິດທິການເຮັດສົງຄາມ ການບໍ່ມີອາວຸດໄວ້ເພື່ອເຮັດສົງຄາມ ການປະຕິເສດຂອງລັດໃນການເຂົ້າຮ່ວມສົງຄາມ ແລະຫຼັກ 3 ປະການກ່ຽວກັບອາວຸດນິວເຄລຍ ( ບໍ່ມີໄວ້ໃນຄອບຄອງ ບໍ່ຜະລິດ ແລະບໍ່ນຳເຂົ້າປະເທດ ) ສະນັ້ນການປ້ອງກັນປະເທດຂອງຍີ່ປຸ່ນຈຶ່ງມີແນວໂຍບາຍພື້ນຖານຄື ການປ້ອງກັນແບບຕັ້ງຮັບ ແລະໄດ້ກໍ່ຕັ້ງກອງກຳລັງປ້ອງກັນຕົວເອງ ( SDF: Self Defense Forces) ພ້ອມກັບພັກດັນໃຫ້ມີການພັດທະນາສັກກາຍາພາບຂອງກອງກຳລັງນີ້ດ້ວຍ.

ເຖິງວ່າຈະບໍ່ໄດ້ມີການໃຫ້ຄຳນິຍາມຈຳກັດຄວາມກ່ຽວກັບຄຳວ່າ ( ການປ້ອງກັນປະເທດແບບຕັ້ງຮັບ) ໄວ້ຢ່າງຈະແຈ້ງ ແຕ່ລັດຖະບານກໍ່ອະທິບາຍວ່າເປັນຍຸດທະສາດແບບຕັ້ງຮັບທີ່

1. ເມື່ອຖືກໂຈມຕີດ້ວຍກຳລັງອາວຸດ ຈຶ່ງຈະເລີ່ມໃຊ້ກຳລັງປ້ອງກັນຕົວ
2. ການໃຊ້ກຳລັງປ້ອງກັນນັ້ນຈະໃຊ້ໃຫ້ນ້ອຍທີ່ສຸດເທົ່າທີ່ຈຳເປັນ
3. ອາວຸດທີ່ໃຊ້ຈະຕ້ອງເປັນອາວຸດສຳຫຼັບປ້ອງກັນຕົວເທົ່ານັ້ນ ບໍ່ໃຊ້ອາວຸດແບບທີ່ໃຊ້ໂຈມຕີ ຊຶ່ງຫາກຈະກ່າວສະເພາະເຈາະຈົງລົງໄປກໍ່ຄືບໍ່ສາມາດມີອາວຸດສົງຄາມທີ່ໃຊ້ສຳຫຼັບທຳລາຍດິນແດນຂອງ

ປະເທດອື່ນຢ່າງເຊັ່ນ ຂີປະນາວຸດຂ້າມທະວີບ ເຄື່ອງບິນທີ່ມລະເບີດທາງໄກໄວ້ໃນຄອບຄອງ

ຈາກເຫດຜົນດັ່ງກ່າວຍີ່ປຸ່ນຈຶ່ງບໍ່ສາມາດທີ່ຈະສົ່ງກຳລັງທະຫານໄປຕ່າງປະເທດໃນພາລະກິດກ່ຽວກັບການເຮັດສົງຄາມໄດ້ ລັດຖະບານຍີ່ປຸ່ນໄດ້ຕີຄວາມວ່າຫາກເປັນສ່ວນໜຶ່ງຂອງກອງກຳລັງເພື່ອຮັກສາສັນຕິພາບຂອງສະຫະປະຊາຊາດກໍ່ຈະສາມາດສົ່ງກອງກຳລັງປ້ອງກັນຕົ້ນເອງໄປຍັງຕ່າງປະເທດໄດ້ ແລະໄດ້ສົ່ງກອງກຳລັງດັ່ງກ່າວໄປເຂົ້າຮ່ວມໜ່ວຍປະຕິບັດງານເພື່ອຮັກສາສັນຕິພາບຂອງປະເທດກັມພູຊາແລະທີ່ຮາບສູງໂຄລານ.

ນອກຈາກນີ້ລັດຖະບານຍັງໄດ້ຕີຄວາມຂອງລັດຖະທຳມະນູນວ່າ ″ການປ້ອງກັນຕົ້ນເອງແບບລວມກຸ່ມເປັນສິ່ງທີ່ຂັດຕໍ່ກົດໝາຍໃນລັດຖະທຳມະນູນ″ ແຕ່ເພື່ອເສີມກຳລັງການປ້ອດງກັນປະເທດຂອງຍີ່ປຸ່ນທີ່ມີຂໍ້ຈຳກັດຢູ່ຫຼາຍຢ່າງນັ້ນຍີ່ປຸ່ນກໍ່ໄດ້ລົງນາມສົນທິສັນຍາຄວາມມັ່ນຄົງກັບອາເມລິກາ ຊຶ່ງກໍ່ຄືສົນທິສັນຍາຄວາມໝັ້ນຄົງຍີ່ປຸ່ນ - ອາເມລິການັ້ນເອງ ແລະຜົນຈາກການຕີຄວາມໃນລັດຖະທຳມະນູນດັ່ງກ່າວຂ້າງຕົ້ນ ເຮັດໃຫ້ອາເມລິກາຕ້ອງຕົກເປັນຝ່າຍແບກພາລະໃນການປ້ອງກັນປະເທດຍີ່ປຸ່ນຢູ່ພຽງຝ້າຍດຽວຢ່າງລີກລ່ຽງບໍ່ໄດ້ ຈຶ່ງເລີ່ມມີສຽງແຮກຮ້ອງຈາກທັງ 2 ປະເທດໃຫ້ແກ້ໄຂການຕີຄວາມລັດຖະທຳມະນູນນີ້ໃໝ່ ດ້ວຍຢ້ານວ່າຫາກປ່ອຍໃຫ້ເປັນເຊັ່ນນີ້ຕໍ່ໄປ ກໍ່ອາດຈະເກີດຄວາມແຕກແຍກຂຶ້ນໃນຄວາມເປັນພັນທະມິດຂອງຍີ່ປຸ່ນ-ອາເມລິກາ ຊຶ່ງເປັນພື້ນຖານຂອງການປ້ອງກັນປະເທດຂອງຍີ່ປຸ່ນ.

<u>ກອງກຳລັງປ້ອງກັນຕົນເອງແລະການພ້ອມສັກກາຍາພາບໃນການປ້ອງກັນ</u>

ກອງກຳລັງປ້ອງກັນຕົນເອງປະກອບດ້ວຍ ທາງບົກ ມີກຳລັງພົນ 1ແສນ 6ໝື່ນຄົນ ແບ່ງເປັນໜ່ວຍລົບ 8 ໜ່ວຍ ກອງພົນນ້ອຍ 6 ໜ່ວຍ ກອງກຳລັງຕິດອາວຸດ 1ໜ່ວຍ ແລະໜ່ວຍຕໍ່ສູ້ອາກາດຊະຍານ 8ໜ່ວຍ ທາງເຮືອ ມີກ້ອງເຮືອລົບ 4 ກອງ ເຮືອຕໍ່ສູ້ເຮືອດຳນ້ຳ 50ລຳ ເຮືອດຳນ້ຳ 16ລຳ ແລະເຄື່ອງບິນ 390ລຳ ທາງອາກາດມີເຄື່ອງບິນປະມານ 400ລຳ ໂດຍມີກຳລັງສຳຄັນຄື ຝູງບິນ F-15 ຈຳນວນ 10ຝູງ ເວົ້າໄດ້ວ່າຍີ່ປຸ່ນໄດ້ພັດທະນາສັກກາຍາພັບທາງທະຫານຂຶ້ນຈົນເປັນອັນດັບທີ່ 7 ຂອງໂລກ ແຕ່ອາເມລິກາໃນປັດຈຸບັນຍັງຄົງມີກອງທັບໃວ້ໃນຍີ່ປຸ່ນເພາະເຫັນວ່າ ສັກກາຍະພາບທາງທະຫານຂອງຍີ່ປຸ່ນຍັງບໍ່ພຽງພໍແລະໄດ້ຮຽກຮ້ອງໃຫ້ມີການເສີມສ້າງກຳລັງເພີ້ມຂື້ນ ເຖິງປັດຈຸບັນ( ປີ 2012 )ກໍ່ຍັງແກ້ໄຂບໍ່ຕົກ ຍ້ອນການຍາກຂະຍາຍແລະຍາຍສະໜາມບິນຂອງກອງທັບອາເມລິກາຈາກໃນເມືອງໜຶ່ງຂອງແຂວງ ໂອກີນາວາໄປຕັ້ງຢູ່ແຄມທະເລ.

## １３. ວາມຮ່ວມມືທາງເສດຖະກິດ　　経済協力（けいざいきょうりょく）

ການໃຫ້ຄວາມຊ່ວຍເຫຼືອແກ່ປະເທດກຳລັງພັດທະນາໃນຮູບແບບຄຕ່າງໆ ເຊັ່ນເງິນກູ້ ການຊ່ວຍເຫຼືອທາງເຕັກໂນໂລຍີ ໃຫ້ເງິນຊ່ວຍເຫຼືອຫຼ້າ ສິ່ງເຫຼົ່ານີ້ຮຽກວ່າ ຄວາມຊ່ວຍເຫຼືອດ້ານການພັດທະນາ ( ODA : Official Development Assistance ) ໃນປີ1995 ຍີ່ປຸ່ນໄດ້ໃຫ້ ODAສູງເຖິງ 1ໝື່ນ 4ພັນ 5ຮ້ອຍລ້ານດອນລາສາຫະລັດ ເຮັດໃຫ້ຍີ່ປຸ່ນກາຍເປັນປະເທດທີ່ໃຫ້ ODA ສູງທີ່ສຸດໃນໂລກຕິດຕໍ່ກັນເຖິງ 5ປີ ແຕ່ສັດສ່ວນຂອງ ODA ຕໍ່GNPໃນປີ 1995 ທຽບໄດ້ເປັນພຽງ 0.28% ຕໍ່າກ່ວາເປົ້າໝາຍ0.7% ທີ່ທາງຍີ່ປຸ່ນໄດ້ຕົກລົງກຳໜົດຕໍ່ກອງປະຊຸມທົ່ວໄປຂອງສະຫະປະຊາຊາດໃນປີ1970. ດ້ວຍເຫດນີ້ຍີ່ປຸ່ນຈຶ່ງຕົກຢູ່ໃນອັນດັບທີ່ 15 ໃນບັນດາ 21ປະເທດທີ່ເປັນສະມາຊິກຂອງຄະນະກຳມະການຊ່ວຍເຫຼືອດ້ານການພັດທະນາ ( DAC ) ຂອງອົງການຮ່ວມມືແລະພັດທະນາເສດຖະກິດ ( OECD ).

ແຜນເຄົ້າໂຄງ ODA ຂອງປະເທດຍີ່ປຸ່ນໄດ້ກຳໜົດຫຼັກການໄວ້ 4 ປະການຄື ການພັດທະນາຄູ່ກັນກັບການອະນຸຮັກສິ່ງແວດລ້ອມ ຊ່ວຍແກ້ໄຂຄວາມຂັດແຍ້ງລະຫວ່າງປະເທດທີ່ມີຢູ່ ຕິດຕາມສະຖານະການທາງທະຫານຂອງປະເທດກຳລັງພັດທະນາຢ່າງໃກ້ຊິດ ແລະສົ່ງເສີມປະຊາທິປະໄຕແລະເສດຖະກິດແບບເສລີ.

### ຄວາມຊ່ວຍເຫຼືອເນັ້ນໜັກໄປທີ່ໂຄງສ້າງພື້ນຖານ

ການໃຫ້ ODA ຍີ່ປຸ່ນໄດ້ໃຫ້ຄວາມສຳຄັນຕໍ່ປະເທດແຖບເອເຊຍ ຊຶ່ງມີຄວາມສຳພັນກັນຢ່າງໃກ້ຊິດທັ້ງດ້ານປະວັດສາດແລະເສດຖະກິດ ໃນປີ 1995 ODA ທີ່ໄດ້ໃຫ້ແກ່ປະເທດໃນອາເຊຍຄິດເປັນປະມານ 54% ຂອງທັ້ງໝົດ ສ່ວນໃນພູມີປະເທດອື່ນໆ ເປັນຄືດັ່ງນີ້ ອັບຟລິກກາແລະອາເມລິກາກາງແລະໃຕ້ມີປະມານ 11-12% ຕາເວັນອອກກາງ 7% ອັດຕາສ່ວນນີ້ບໍ່ໄດ້ມີການປ່ຽນແປງຫຼາຍໃນໄລຍະ10ປີທີ່ຜ່ານມາ ແຕ່ພ້ອມກັນນີ້ ການເພີ້ມຂື້ນຂອງລາຍໄດ້ໃນກຸ່ມປະເທດອາຊຽນ ເປັນທີ່ຄາດກັນວ່າປະເທດໃນແຖບເອເຊຍຈະຄ່ອຍໆ ເລີ້ມພົ້ນຈາກສະຖານະພາບທີ່ເປັນປະເທດຜູ້ໄດ້ຮັບການຊ່ວຍເຫຼືອ ແມ້ແຕ່ປະເທດຈີນໃນໄລຍະ10ປີກ່ອນຍີ່ປຸ່ນກໍ່ໄດ້ໃຫ້ການຊ່ວຍເຫຼືອແລະກໍ່ຍັງສືບຕໍ່ໃຫ້ການຊ່ວຍເຫຼືອກຸ່ມປະເທດອິນດູຈີນຢູ່ຕໍ່ມາ ແຕ່ການຊ່ວຍເຫຼືອນີ້ສ່ວນໃຫ່ຍກໍ່ຈະປ່ຽນໄປເນັ້ນໜັກໃສ່ພູມມີພາກອື່ນນອກຈາກເຂດອາເຊຍ.
ການຊ່ວຍເຫຼືອມີ 2ປະເພດຄື ແບບໃຫ້ຫຼ້າແລະແບບໃຫ້ເງິນກູ້

## １４. ການຟື້ນຟູເສດຖະກິດຂອງຍີ່ປຸ່ນພາຍຫຼັງສົງຄາມໂລກ 戦後日本経済復興

ເສດຖະກິດຂອງຍີ່ປຸ່ນທີ່ຕົກຢູ່ໃນສະພາວະສັບສົນຈາກສົງຄາມໂລກຄັ້ງທີ່ 2 (ປີ 1945)ໄດ້ເລີ້ມພື້ນຕົວຂື້ນຢ່າງວອງໄວຕັ້ງແຕ່ໄລຍະປີ 1947ແລະໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງຕະລອດລະຍະເວລາ 20ປີ ນັບຈາກປີ 1955 ຊຶ່ງນັບໄດ້ວ່າເປັນໄລຍະທີ່ເສດຖະກິດຈະເລີນເຕີບໂຕຢ່າງວອງໄວ ຫຼັງຈາກຜ່ານພົນວິກິດການນ້ຳມັນ 2 ຄັ້ງໃນໄລຍະປີ 1970 – 1979 ເສດຖະກິດຂອງຍີ່ປຸ່ນກໍ່ເຂົ້າສູ່ຍຸກຈະເລີນເຕີບໂຕຢ່າງມີສະຖຽນລະພາບ ແຕ່ຈາກການພຸ່ງສູງຂື້ນຂອງລາຄ່າດິນແລະຫຸ້ນ(ເສດຖະກິດຟອງສະບູ)ໃນໄລຍະປີ1985-1989 ແລະການແຕກຕົວຂອງຟອງສະບູທີ່ເກີດຂື້ນຕາມມາ ລວມທັ້ງຄ່າຂອງເງິນເຢັນຖີບຕົວສູງຂື້ນຢ່າງວອງໄວເຮັດໃຫ້ເສດຖະກິດຍີ່ປຸ່ນຕົກຢູ່ໃນພາວະຕົກຕ່ຳເປັນເວລາຍາວນານຕັ້ງແຕ່ປີ 1990 ແລະໃນປັດຈຸບັນກໍຍັງຄົງປະສົບກັບບັນຫາເສດຖະກິດຖອຍຫຼັງຢູ່.

### ສະພາບເສດຖະກິດທີ່ຍຸ່ງຍາກພາຍຫຼັງການແພ້ສົງຄາມ

ຫຼັງຈາກແພ້ສົງຄາມ (ປີ 1945) ເສດຖະກິດຂອງຍີ່ປຸ່ນກໍ່ຢູ່ໃນສະພາບທີ່ຍູ້ງຍາກທີ່ສຸດ ປະລິມານການຜະລິດພາກອຸສາຫະກຳຕົກລົງໄປຢູ່ໃນລະດັບ 1 ໃນ 10ຂອງໄລຍະກ່ອນສົງຄາມໂລກ ແລະຫຼັງຈາກນັ້ນກໍກະເຕືອງຂື້ນມາຢູ່ໃນລະດັບ 1 ໃນ 3ດ້ານຊີວິດຄວາມເປັນຢູ່ ປະຊາຊົນຕ້ອງດີ້ນລົນພຽງຫາອາຫານເພື່ອຄວາມຢູ່ລອດຂອງຊີວິດ. ການບໍລິໂພກຕາມຕົວເລກ Engel ນັ້ນສະແດງອັດຕາສ່ວນຂອງຄ່າໃຊ້ຈ່າຍດ້ານອາຫານທຽບກັບຄ່າໃຊ້ຈ່າຍທັງໝົດ ໃນໄລຍະກ່ອນສົງຄາມມີພຽງແຕ່ 30% ໄດ້ສູງຂື້ນເປັນ 68%ໃນປີ 1946 ອັດຕະເງິນເຟີ້ອກໍສູງລາຄາສິນຄ້າໃນປີ1945ສູງເປັນ44ເທົ່າຂອງເມື່ອປີ1937 ແລະໄດ້ພົ່ງສູງຂື້ນເປັນ100ເທົ່າໃນປີ1948 ການຄ້າຂາຍກັບຕ່າງປະເທດກໍ່ຢູ່ໃນສະພາບທີ່ເວົ້າໄດ້ວ່າຢຸດສະງັກ.

ໃນພາວະອັນຍຸ່ງຍອງທາງເສດຖະກິດເຊັ່ນນີ້ ສິ່ງທີ່ຕ້ອງປະຕິບັດກ່ອນສິ່ງອື່ນໃດກໍ່ຄືການພື້ນຟູກຳລັງການຜະລິດແລະລົດຄ່າອັດຕາເງິນເຟີ້ອ ມາດຕາການທີ່ຖືກນຳມາໃຊ້ພື້ນຟູກຳລັງຜະລິດກໍ່ຄືລະບົບການຜະລິດໂດຍຈັດລຳດັບຄວາມສຳຄັນ ຊຶ່ງເປັນລະບົບທີ່ທຸ່ມເທຊັບພະຍາກອນລົງໄປເພື່ອເພີ້ມການຜະລິດຖານຫີນ

ແລະເຫຼັກ ແລ້ວນຳໄປຜະລິດແລະໃຊ້ໃນການຜະລິດເປັນອຸສາຫະກຳຢ່າງອື່ນໆຕາມລຳດັບ ນອກຈາກນີ້ ເພື່ອຄວບຄຸມການອຸບປະໂພກບໍລິໂພກແລະໃຫ້ຄວາມສຳຄັນກັບການຜະລິດສິ່ງຂອງທີ່ຈຳເປັນກ່ອນ ລັດທະບານໄດ້ຈັດຕັ້ງໜ່ວຍງານອັນມີອຳນາດ ທີ່ຮຽກວ່າ ສົນປະຕິບັດການເພື່ອຄວາມໝັ້ນຄົງທາງເສດຖະກິດຂຶ້ນມາແລະໄດ້ທີການໃຊ້ມາດຕາການບັງຄັບ ຢ່າງເຊັ່ນ ການປັນສ່ວນຕາມປະເພດສິ່ງຂອງ ນອກຈາກນີ້ ເພື່ອຄວບຄຸມການອຸບປະໂພກບໍລິໂພກກໍ່ໄດ້ມີກົດຫ້າມຖອນເງິນຝາກໃນທະນາຄານເກີນກ່ວາອົງເງິນທີ່ກຳໜົດແຕ່ກໍ່ບໍ່ສາມາດຄວບຄຸມບັນຫາເງິນເຟີ້ອໄດ້.

## ການຟື້ນຕົວຈາກສະພາບວະຕິກຕໍ່າ

ຍີ່ປຸ່ນໄດ້ກາຍເປັນຈຳເລີຍສົງຄາມແລະຖືກຄວບຄຸມໂດຍຝ່າຍພັນທະມິດ GHQ ເປັນໄລຍະເວລາ 7 ປີ ໃນລະວ່າງນັ້ນ GHQ ທຳການປະຕິຮູບເສດຖະກິດຂອງຍີ່ປຸ່ນໃຫ້ເປັນແບບເສລີປະຊາທິປະໄຕ.
ພ້ອມກັນນັ້ນກໍ່ໄດ້ລະບຸໃນລັດທະທຳມະນູນຂອງຍີ່ປຸ່ນວ່າ ( ຍົກເລີກການທຳສົງຄາມ )ບໍ່ເອົາໃຈຕໍ່ການມີກຳລັງອາວຸດ ສະນັ້ນຍີ່ປຸ່ນຈຶ່ງສາມາດຈູດສູມພະລັງທີ່ມີຢູ່ໃສ່ໃນການພື້ນຟູເສດຖະກິດໄດ້.
ອີກປະການໜຶ່ງຍີ່ປຸ່ນໄດ້ກູ້ຢືມເງິນຈາກອາເມລິກາ ທະນາຄານໂລກແລະອົງການການເງິນສາກົນອື່ນໆ ມາສ້າງທາງລົດໄຟ ຖະໜົນຫົນທາງ ພະລັງງານແຟງຟ້າແລະອື່ນໆທີ່ເປັນໂຄງລ່າງພື້ນຖານທີ່ສຳຄັນດ້ວຍອັດຕາດອກເບຍຕໍ່າແລະເປັນປະໂຫຍດແກ່ຍີ່ປຸ່ນຫຼາຍ (ເງິນກູ້ຢືມດັ່ງກ່າວໄດ້ຈ່າຍຄືນໝົດໃນປີ 1990)

## １５．ການປະຕິຮູບກຸ່ມນາຍທຶນ 財閥解体 (ざいばつかいたい)

ກ່ອນສົງຄາມໂລກຄັ້ງທີ່ 2 ກຸມນາຍທຶນທີ່ມີຄວາມພູກພັນກັບລັດທະບານ (ຖືຫຸ້ນຮ່ວມກັນ)ຊຶ່ງເປັນບໍລິສັດແບບຕະກຸນທີ່ໃຫ່ຍໂຕເຊັ່ນ ມິດຈືອີແລະຊີມິໂຕໂມະເປັນຕົ້ນໄດ້ຖືກປະຕິຮູບໃຫ້ສະຫຼາຍຕົວ

## １６．ການປະຕິຮູບດິນກະສິກຳ 農地改革 (のうちかいかく)

ກ່ອນສົງຄາມຊາວກະສິກອນທີ່ບໍ່ມີດິນເປັນຂອງຕົວເອງນັ້ນຕ້ອງຈ່າຍເງິນຄ່າເຊົ່າດິນໃຫ້ແກ້ເຈົ້າຂອງດິນ (ລະບອບສັກດີນາ)ເພື່ອທຳການກະເສດນັ້ນໄດ້ຖືກຍຸບ,
ທາງລັດຖະບານໄດ້ບັງຄັບຊື້ເອົາດິນທີ່ເຈົ້າຂອງບໍ່ມີການຜະລິດນັ້ນເອົາໄປຂາຍໃຫ້ແກ່ຊາວກະສິກອນຂະນາດໜ້ອຍຜູ້ບໍ່ມີດິນນັ້ນດ້ວຍລະຄາຖືກ.

## １７．ການກໍ່ຕັ້ງສະຫະກອນຊາວນາ 農 協 協 同組合 (のうきょうきょうどうくみあい)

ສະກອນຊາວນານີ້ມີພາລະໜ້າທີ່ອັນສຳຄັນຫຼາຍຂອງການປະຕິຮູບດິນເພື່ອອຸ້ມຊູຊາວກະສິກອນຂະນາດໜ່ອຍໃຫ້ມີປະສິດຕິພາບໃນການຜະລິດແລະມີຄວາມສຳເລດຕໍ່ໜ້າທີ່ໄດ້, ຫຼັງສົງຄາມການກະເສດຂອງຍີ່ປຸ່ນກໍ່ມີຄວາມກ່າວໜ້າຢ່າງວອງໄວ. ເຖີງວ່າຊາວກະສິກອນທີ່ມີເນື້ອທີ່ດິນຜະລິດຂະນ້ອຍກໍ່ຕາມຍ້ອນການລວມຕົວກັນເປັນກຸ່ມ ອອກເງິນຮ່ວມກັນຊື້ເຄື່ອງຈັກ,ຊື້ຝຸ່ນ,ຊື້ອາຫານສັດແລະອື່ນໆນອກນັ້ນກໍ່ມີການຮຽນຮູ້ແລະພັດທະນາດ້ານເຕັກນິກການຜະລິດກະສິກຳໄປພ້ອມໆກັນ ທາງສະຫະກອນຍັງສະໜອງແລ້ງເງິນກູ້ທີ່ຈຳເປັນໃຫ້ແກ່ສະມາຊິກໃນອັດຕາດອກເບຍທີ່ຕໍ່າອີກດ້ວຍ. ເພື່ອໃຫ້ຜະລິດຕະພັນຕ່າງໆເຂົ້າຊູ່ຕະຫຼາດໄດ້ໂດຍກົງ ຈຶ່ງມີການຕັ້ງສົນສົ່ງແລະຊື້ສິນຄ້າລວມກຸ້ມວິທີແບບນີ້ຈຶ່ງໄດ້ເກີດຂື້ນມີຄວາມສຳເລດດີແລະນຳໃຊ້

ວິທີນີ້ມາເຖິງປັດຈຸບັນ.
ນອກນັ້ນກໍ່ຍັງໄດ້ມີການຍົກລະດັບຖານະຂອງຜູ້ອອກແຮງງານໂດຍການຈັດຕັ້ງສະຫະພັນແຮງງານແລະໃຫ້ສິດໃນການຕໍ່ລອງຄ່າແຮງງານກັບນາຍຈ້າງໄດ້,ໝາຍເຖິງຄວາມສະເໝີພາບຂອງລູກຈ້າງກັບນາຍຈ້າງ ສິ່ງຕ່າງໆເຫຼົ່ານີ້ນັບໄດ້ວ່າເປັນການວາງກອບໃນການພັດທະນາເສດຖະກິດຫຼັງສົງຄາມ.

## １８．ການປ່ຽນແປງຂອງໂຄງສ້າງທາງການຜະລິດ　産業構造の変遷

　ພາຍຫຼັງສົງຄາມໂຄງສ້າງທາງການຜະລິດຂອງຍີ່ປຸ່ນໄດ້ປ່ຽນແປງໄປຢ່າງວອງໄວຫຼາຍ ໂດຍຂັ້ນທຳອິດຈາກການກະສິກຳໄປເປັນອຸດສາຫະກຳແລະຫຼັງຈາກນັ້ນເປັນການບໍລິການ. ດ້ວຍເຫດນີ້ໃນປີ1994 ຈາກຜົນຜະລິດມວນລວມ (GDP) ທັງໝົດ 499 ລ້ານລ້ານເຢັນ ເປັນຜົນຜະລິດຈາກອຸສາຫະກຳທີ່ 1 (ການກະເສດ,ປ່າໄມ້ແລະປະໂມງ) 10ລ້ານລ້ານເຢັນ ຈາກອຸສາຫະກຳ ທີ່ 2 ( ເໝືອງແຮ່, ຜະລິດສິ້ນຄ້າ, ການກໍ່ສ້າງ) 170ລ້ານລ້ານເຢັນ ອຸດສາຫະກຳ ທີ່ 3 ( ການບໍລິການແລະອື່ນໆ) 319ລ້ານລ້ານເຢັນ

## １９．ເທັກໂນໂລຍີການຜະລິດຂອງຍີ່ປຸ່ນ　日本の製造技術

　ກົນລະຍຸດທາງເຕັກໂນໂລຍີຂອງຍີ່ປຸ່ນ ນັບຕັ້ງແຕ່ໄລຍະທີ່ເສດຖະກິດຈະເລີນເຕີບໂຕຢ່າງວອງໄວເປັນຕົ້ນມາການປະຕິຮູບເຕັກໂນໂລຍີດ້ານອຸສາຫະກຳການຜະລິດຂອງຍີ່ປຸ່ນໄດ້ດຳເນີນໄປຢ່າງວອງໄວ ໂດຍການນຳເຂົ້າເຕັກໂນໂລຍີຈາກຕ່າງປະເທດມາປະຍຸກໃຊ້ແລ້ວຄິດຄົ້ນພັດຖະນາຜະລິດສິ້ນສ່ວນສິ່ງປະກອບຢ່າງອື່ນໃສ່ໃຫ້ດີຂຶ້ນດ້ວຍຕົວເອງ ຢ່າງເຊັ່ນ ໃນກໍລະນີ ເຄື່ອງຈັກຜະລິດໄຟຟ້າດ້ວຍພະລັງງານນິວຄເລຍແລະເຄື່ອງຈັກກົນໜັກອື່ນໆ ຍີ່ປຸ່ນຈະນຳເຂົ້າໜ່ວຍທຳອິດຈາກຕ່າງປະເທດ ແຕ່ເຄື່ອງໜ່ວຍຕໍ່ໄປຈະຜະລິດເອງໃນປະເທດເພື່ອພັດຖະນາເຕັກໂນໂລຍີໃຫ້ທັດທຽມກັບຕ່າງປະເທດ ນອກຈາກນີ້ NEC ແລະ Fujitsu ຊຶ່ງເດີມເປັນຜູ້ຜະລິດທີ່ຊ່ຽວຊານໃນອຸບປະກອນການສື່ສານໄດ້ທຸ້ມເທຄວາມພະຍາຍາມໃນການພັດຖະນາເຕັກໂນໂລຍີທາງຄອມປິວເຕີແລະວົງຈອນ IC ຈົນຮອດປີ 1970ກໍ່ສາມາດຊີງບັນລັງຂອງ IBM ທີ່ຜູກຂາດຕະລາດຢູ່ແລະກ້າວຂຶ້ນມາເປັນທີ່ໜຶ່ງໃນຜູ້ຜະລິດອຸບປະກອນສາລະສົນເທດຂັ້ນນຳຂອງໂລກ.

## ２０．ແຫຼ່ງພະລັງງານຂອງຍີ່ປຸ່ນ　日本のエネルギー供給

ໃນຊ່ວງປີ 1950-1960 ຍີ່ປຸ່ນເລີ່ມພິ່ງພາພະລັງງານຈາກນ້ຳມັນຫຼາຍຂຶ້ນ ຖ້າຄຳນວນພະລັງງານໄຟຟ້າອອກມາໃນຮູບຂອງເຊື້ອໄຟທີ່ໃຊ້ໃນການຜະລິດ ແລ້ວນຳໄປລວມເຂົ້າກັບພະລັງງານອື່ນໆ ແລ້ວສັດສ່ວນຂອງນ້ຳມັນແລະ ກາດສ໌ທຳມະຊາດຄິດເປັນປະມານ 70% ຂອງພະລັງງານຂັ້ນທີ່ 1 ທັງໝົດທີ່ເຫຼືອເປັນຖ່ານຫີນ 16% ພະລັງງານນິວຄເລຍ 10%ແລະພະລັງນ້ຳ 4% ສຳຫຼັບນີ່ປຸ່ນຊຶ່ງບໍ່ມີແຫຼ່ງນ້ຳມັນໃນປະເທດແລ້ວ ການເພີ້ມສັດສ່ວນການໃຊ້ພະລັງງານຈາກແຫຼ່ງອື່ນນອກເໜືອຈາກນ້ຳມັນຈຶ່ງເປັນສິ່ງຈຳເປັນ ດັ່ງນັ້ນຄວາມຄາດຫວັງຈຶ່ງຕົກຢູ່ກັບການໃຊ້ພະລັງງານນິວຄເລຍໃນການຜລິດກະແສໄຟຟ້າ.
ມາເຖິງປັດຈຸບັນຈາກຂວັນຫຼັງຂອງອຸບັດເຫດທີ່ເກີດຂຶ້ນກັບໂຮງງານໄຟໄຟ້ນິວຄເລຍໃນຕ່າງປະເທດແລະພາຍໃນປະເທດຍ້ອນຟອງທະເລຍັກໃຫ່ຍ (Tsunami) ຈຶ່ງມີຂໍເຄັ່ງຂັດຂຶ້ນຫຼາຍທີ່ຈະຕ້ອງດູແລເລື່ອງຄວາມປອດຳໄພແລະການອານຸຮັກສີ່ງແວດລ້ອມໃຫ້ທົ່ວເຖິງພ້ອມໆກັບຕ້ອງຂໍຄວາມເຂົ້າໃຈແລະຄວາມຮ່ວມມືຈາກປະຊາຊົນ.

## ２１．ຊີວິດປະຈຳວັນຂອງນັກທຸລະກິດຍີ່ປຸ່ນ　ビジネスマンの一日

ການເລີ້ມດຳເນີນກິດຈະວັດປະຈຳວັນຂອງພະນັກງານບໍລິສັດແລະພະນັກງານລັດຂອງຍີ່ປຸ່ນນັ້ນ ຈະເລີ້ມແຕ່ເຊົ້າຕັ້ງແຕ່ 8 ໂມງເຄິ່ງຫຼື 9ໂມງ ນັກທຸລະກິດແລະພະນັນງານສ່ວນໃຫຍ່ຈະໃຊ້ເວລາໃນການເດີນທາງຈາກບ້ານໄປບ່ອນເຮັດວຽກດ້ວຍສະເລຍປະມານ 1 ຊົ່ວໂມງ ດັ່ງນັ້ນເຂົາເຈົ້າຈື່ງຈຳເປັນຕ້ອງອອກຈາກບ້ານຕັ້ງແຕ່ເວລາປະມານ 7 ໂມງ ເພື່ອໄປເຖີງບໍລິສັດໃຫ້ທັນເວລາການ ການເດີນທາງນັ້ນຕ້ອງປະເຊີນກັບສະພາບທີ່ຕ້ອງຍືນຕະລອດການເດີນທາງໃນລົດໄຟທີ່ແນ່ນໄປດ້ວຍຜູ້ໂດຍສານໃນຊົ່ວໂມງເລັ່ງດ່ວນ ແລະກ່ວາຈະຮອດບໍລິສັດທຸກຄົນກໍຢູ່ໃນສະພາບທີ່ອິດເໝື່ອຍຈາກການເດີນທາງແລ້ວ ຕໍຈາກນັ້ນ ເຂົາເຈົ້າກໍ່ຈະປ້ຳບັດບັນທຶກເວລາເຂົ້າເຮັດວຽກປະຈຳວັນແລະເລີ້ມເຮັດວຽກ.

ໂດຍປົກກະຕິແລ້ວ ບໍລິສັດຍີ່ປຸ່ນທົ່ວໄປແລ້ວມັກມີປະເພນີຈັດການປະຊຸມໃນລະດັບຕ່າງໆ ເຊັ່ນ ການປະຊຸມຜະແນກຂາຍ, ການໂຄງສະນາປະຊາສຳພັນ,ຂອງແຕ່ລະຜະແນກ, ການປະຊຸມຫົວໜ້າຜະແນກ,ຫົວໜ້າສາຂາເປັນຕົ້ນ ການປະຊຸມນີ້ຈະມີການຈັດຂື້ນເປັນລາຍອາທິດແລະລາຍເດືອນໂດຍມີການກຳໜົດເວລາລວງໜ້າໄວ້ຢ່າງແນ່ນອນ ດັ່ງນັ້ນ ຈຳນວນຄັ້ງຂອງການເຂົ້າຮ່ວມປະຊຸມຂອງພະນັກງານກໍ່ຫຼາຍຂື້ນຕາມໜ້າທີຂອງຕົນທີ່ຮັບຜິດຊອບ ຍິ່ງກວ່ານັ້ນການປະຊຸມທີ່ໃຊ້ເວລາໝົດມື້ກໍ່ບໍ່ແມ່ນສິ່ງທີ່ແປກປະຫຼາດເຖີງວ່າການໃຊ້ເວລາປະຊຸມນັ້ນຈະຍາວກໍ່ຕາມ ແຕ່ກໍບໍ່ໄດ້ໝາຍຄວາມວ່າຈະສາມາດຫາຂໍ້ສະລຸບຈາກການປະຊຸມໄດ້ສະເມີໄປ ດັ່ງນັ້ນຈື່ງມັກເກີດປະກົດການເລື້ອຍໆຈຳເປັນຕ້ອງຍືດເວລາການປະຊຸມອອກໄປຫຼືນັດປະຊຸມອີກເພື່ອຫາຂໍ້ສະລຸບໃໝ່ໃນມື້ຕໍ່ໄປ.

ຫ້ອງອາຫານຂອງບໍລິສັດແລະຮ້ານກາເຟ

ເມື່ອເຖີງເວລາພັກຮັບປະທານອາຫານທ່ຽງ ໂດຍປົກຕິແລ້ວພະນັກງານບໍລິສັດມັກຈະອອກໄປກິນຕາມຮ້ານອາຫານທີ່ຕັ້ງຢູ່ໃກ້ບໍລິເວນບໍລິສັດ ແຕ່ກໍ່ມີບາງບໍລິສັດທີ່ສ້າງຫ້ອງອາຫານໄວ້ໃນບໍລິສັດ ເພື່ອໃຫ້ພະນັກງານໄດ້ເຂົ້າໄປໃຊ້ບໍລິການທີ່ທາງບໍລິສັດສ້າງຂື້ນ ໂດຍບໍລິສັດໄດ້ເຮັດສັນຍາກັບຜູ້ປະກອບການ ໃນກໍລະນີນີ້ບໍລິສັດຈະເປັນຝ່າຍຮັບພາລະຄ່າໃຊ້ຈ່າຍບາງສ່ວນໃນການດຳເນີນງານດ້ວຍ ເຮັດໃຫ້ລາຄາອາຫານຂອງຫ້ອງອາຫານນັ້ນຖືກກ່ວາຫ້ອງຕະລາດ ການສ້າງຫ້ອງອາຫານໃນບໍລິສັດນີ້ກໍ່ຄືເປັນການຈັດສະວັດດີການສຳລັບພະນັກງານຢ່າງໜື່ງ ພ້ອມດຽວກັນກໍ່ເປັນການເພີ້ມປະສິດຕິພາບການເຮັດວຽກຂອງພະນັກງານໃນບໍລິສັດອີກດ້ວຍເຊັ່ນ ຕົວຢ່າງຂອງປະສິດຕິພາບທີ່ວ່ານີ້ກໍຄືການມີຄວາມສຳພັນສັງສັນກັນໃນໝູ່ພະນັກງານແລະປະຫຍັດເວລາລາໃນການອອກໄປກິນອາຫານທ່ຽງທາງນອກ ເພາະພະນັກງານສາມາດກິນອາຫານໃນບໍລິສັດແລະສາມາດກັບມາເຮັດວຽກໄດ້ທັນທີ ເຫຼົ່ານີ້ເປັນຕົ້ນ.

ສ່ວນການປະຊຸມທຸລະກິດນັ້ນ ໂດຍປົກກະຕິແລ້ວມັກຈະປະຕິບັດກັນໃນບໍລິສັດເອງ ແຕ່ໃນກໍລະນີນັດໝາຍທີ່ບໍ່ສຳຄານປານໃດນັ້ນ ຊາວຍີ່ປຸ່ນກໍອາດຈະນັດໝາຍຄູ່ສົນທະນາໄປພົບກັນຢູ່ຮ້ານກາເຟບ່ອນໃດບ່ອນໜື່ງເມື່ອພົບກັນແລ້ວກໍ່ຈະດື່ມກາເຟໄປພ້ອມໆກັນກັບການສົນທະນາທຸລະກິດແບບເພີນໃຈກໍ່ໄດ້. ຊື່ງການເລືອກສະຖານທີການປະຊຸມສົນທະນາທຸລະກິດແບບໃດນັ້ນກໍ່ຂື້ນກັບຄວາມສຳຄັນຂອງເນື້ອຫາທີ່ຈະສົນທະນາຫຼືຄວາມສຳພັນລະຫວ່າງບຸກຄົນ ການນັດພົບກັບລູກຄ້າເພື່ອເຈລະຈາທຸລະກິດທີ່ຮ້ານກາເຟນີ້ ໃຫ້ຜົນດີ 2 ປະການແກ່ພະນັກງານບໍລິສັດຂອງຍີ່ປຸ່ນຄື ເປັນທັງການເຮັດວຽກແລະພັກຜ່ອນປ່ຽນບັນຍາກາດໄປໃນຕົວດ້ວຍ ສຳລັບຄ່າໃຊ້ຈ່າຍທັງໝົດນັ້ນບໍລິສັດຈະເປັນຜູ້ຮັບຜິດຊອບ.

ຫລັງເລີກການ

ພະນັກງານບໍລິສັດຂອງຍີ່ປຸ່ນນັ້ນ ເຖິງຈະຮອດເວລາເລີກການແລ້ວກໍ່ຕາມ ມັກຈະບໍ່ກັບບ້ານທັນທີ ສ່ວນໃຫ່ຍຈະເຮັດວຽກລ່ວງເວລາເພື່ອຢູ່ສະສາງວຽກທີ່ບໍລິສັດຕໍ່ໄປຈົນແລ້ວວຽກ ນອກຈາກນັ້ນພະນັກງານບາງຄົນກໍ່ຕ້ອງພາລູກຄ້າໄປລ້ຽງຮັບຮອງຕໍ່ຕອນຄໍ່າ ກ່ວາການລ້ຽງຮັບຮອງຈະຈົບ ແລະຕົນເອງຈະເດີນທາງກັບເຖິງເຮືອນກໍລ່ວງເຂົ້າເປັນເວລາດຶກດື່ນ ສະພາບແບບນີ້ຖືວ່າເປັນເລື່ອງທໍາມະດາສໍາລັບພະນັກງານບໍລິສັດແລະນັກທຸລະກິດຂອງຊາວ ຍີ່ປຸ່ນ ແຕ່ເນື່ອງຈາກວ່າເກີດເຫດການສະພາບເສດຖະກິດຕົກຕໍ່າຫຼາຍຕັ້ງແຕ່ຊ່ວງຕົ້ນປີ 1990 ເປັນຕົ້ນມາ ເຮັດໃຫ້ເລີ່ມມີບໍລິສັດທີ່ຕັດງົບປະມານສໍາຫຼັບໃຊ້ຈ່າຍລ້ຽງຮັບຮອງແຂກໃຫ້ລຸດນ້ອຍລົງ ສາເຫດອັນນີ້ເຮັດໃຫ້ພຶດຕິກໍາຕ່າງໆ ເຫຼົ່ານີ້ຂອງພະນັກງານບໍລິສັດຍີ່ປຸ່ນລຸດລົງດ້ວຍເຊັ່ນກັນ.

## ２２. ການສັງສັນຂອງນັກທຸລະກິດ　ビジネスマンの付き合い

ໃນອົງກອນຫຼືບໍລິສັດຍີ່ປຸ່ນ ຈະໃຫ້ຄວາມສໍາຄັນກັບການຮັກສາສັມພັນຕະພາບລະຫວ່າງບຸກຄົນ ດັ່ງຄໍາທີ່ຮຽກອົງກອນຫຼືບໍລິສັດຍີ່ປຸ່ນວ່າ ( ກຸ່ມນິຍົມ ) ຈາກເຫດຜົນດັ່ງກ່າວນີ້ເຮັດໃຫ້ເກີດຮູບແບບພຶດຕິກໍາຕ່າງໆທັ້ງທີ່ເປັຮແບບທາງການແລະບໍ່ເປັຮທາງການ ເພື່ອເສີມສ້າງຄວາມຮູ້ສຶກຮ່ວມກຸ່ມແລະເປັນອັນໜຶ່ງອັນດຽວກັນໃນບໍລິສັດ.

ໂດຍທົ່ວໄປແລ້ວ ພະນັກງານໃນອົງກອນຫຼືບໍລິສັດຍີ່ປຸ່ນຈະໃຊ້ເວລາເກີບເຄິ່ງໜຶ່ງຂອງຊ່ວງຊີວິດເຮັດວຽກຢູ່ທີ່ບໍລິສັດໃດໜຶ່ງພຽງບ່ອນດຽວ ດັ່ງນັ້ນຄົນທີ່ຄົບຫາສະມາຄົມດ້ວຍນັ້ນກໍ່ຈະເປັນຄົນທີ່ເຮັດວຽກໃນສະຖານທີ່ເຮັດວຽກດຽວກັນເປັນສ່ວນໃຫ່ຍ ການຮຽນຮູ້ທີ່ຈະສ້າງຄວາມສໍາພັນກັບເພື່ອນຮ່ວມງານໃຫ້ລາບລື່ນຖືວ່າເປັນເງື່ອນໄຂປະການສໍາຄັນທີ່ພະນັກງານບໍລິສັດແລະນັກທຸລະກິດຕ້ອງຮູ້ ແຕ່ວ່າເນື່ອງຈາກສະພາບການຈ້າງງານແລະຮູບແບບປະເພນີປະຕິບັດທີ່ປ່ຽນໄປຢ່າງຫຼາກຫຼາຍໃນປັດຈຸບັນກໍ່ມີສ່ວນເຮັດໃຫ້ພຶດຕິກໍາແລະກິດຈະກໍາສ້າງຄວາມສໍາພັນກັບເພື່ອນຮ່ວມງານໃນບໍລິສັດຍີ່ປຸ່ນປ່ຽນໄປໄດ້ເຊັ່ນກັນ.

ກິດຈະກໍາການແຂ່ງຂັນກິລາແລະການສະລອງເທດສະການທ້າຍປີ

ບໍລິສັດສ່ວນໃຫ່ຍໃນຍີ່ປຸ່ນມັກກໍາໜົດຊ່ວງເວລາທີ່ແນ່ນອນເພື່ອຈັດກິດຈະກໍາສັນທະນາການໃນອົງກອນທັ້ງໝົດຫຼືພາຍໃນແຕ່ລະຜະແນກຂອງບໍລິສັດ ຕົວຢ່າງການຈັດກິດຈະກໍາຕ່າງໆ ດັ່ງກ່າວນັ້ນກໍ່ຄືກິດຈະກໍາການແຂ່ງຂັນກິລາ ຊຶ່ງຄອບຄົວຂອງພະນັກງານບໍລິສັດສາມາດເຂົ້າຮ່ວມກິດຈະກໍາໄດ້ ການເດີນທາງທ່ອງທ່ຽວຮ່ວມກັນຂອງພະນັກງານ ການຈັດງານລ້ຽງອໍາລາໃຫ້ພະນັນງານຜູ້ທີ່ຕ້ອງໂຍກຍ້າຍໄປຮັບຕໍາແໜ່ງໃໝ່ຫຼືຈັດງານລ້ຽງຕ້ອນຮັບພະນັກງານໃໝ່ແລະການຈັດງານເທດສະການສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ເປັນຕົ້ນ.

ຜົນລັບທີ່ໄດ້ຈາກການຈັດກິດຈະກໍາຕ່າງໆ ເຫຼົ່ານີ້ກໍ່ຄືການສ້າງປະສິດຕິພາບການເຮັດວຽກໃນອົງກອນກໍ່ຄືການທີ່ບໍລິສັດປູກຝັງພະນັກງານໃຫ້ເກີດຄວາມຮູ້ສຶກສໍານຶກວ່າບໍລິສັດເໝືອນຄອບຄົວຂອງຕົນເອງນັ້ນສົ່ງຜົນໃຫ້ພະນັກງານໃນບໍລິສັດສ້າງຄວາມສໍາພັນຢ່າງແນ່ນແຟ້ນລະຫວ່າງບຸກຄົນໃນບໍລິສັດພ້ອມມີຄວາມສໍານຶກວ່າທຸກຄົນໃນອົງກອນຈະຕ້ອງຮ່ວມທຸກຮ່ວມສຸກດ້ວຍກັນ.

ໂຄມໄຟສີແດງ　　赤(あか)ちょうちん

ໂຄມໄຟສີແດງເປັນຊື່ຮ້ານສະຖານທີ່ດື່ມເຫຼົ້າສາທາລະນະທີ່ຊາວຍີ່ປຸ່ນມັກໄປໃຊ້ບໍລິການໃນເວລາທີ່ຕ້ອງການພົບປະສັງສັນກັບເພື່ອນຮ່ວມງານຫຼັງເລີກວຽກຫຼືໃນກໍລະນີເຈົ້ານາຍກໍອາດພາລູກນ້ອງໄປດື່ມເຫຼົ້າແລະສົນທະນາກັນ ໃນສະຖານທີ່ເຫຼົ່ານີ້ດ້ວຍເຊັ່ນກັນ ສະຖານທີ່ດື່ມເຫຼົ້າສາທາລະນະນີ້ເປັນບ່ອນທີ່ຄົນຍີ່ປຸ່ນເຂົ້າ

ໄປດື່ມແລະລົມກັນເລື່ອງແບບກັນເອງໄດ້ຢ່າງບໍ່ເປັນທາງການ ຊຶ່ງອາດຈະລວມໄປເຖິງການເລົ້າເຖິງຄວາມບໍ່ພໍໃຈຂອງຕົນເອງດ້ວຍ ຈຶ່ງສາມາດຖືໄດ້ວ່າ ສະຖານທີ່ເຫຼົ່ານີ້ເປັນສະຖານທີ່ຄາຍຄວາມຄຽດສຳຫຼັບຄົນຍີ່ປຸ່ນແຫ່ງໜຶ່ງ ນອກຈາກນີ້ ພະນັກງານບໍລິສັດບາງຄົນກໍ່ມັກໄປຫຼິ້ນເກມຕ່າງໆຕາມສະຖານທີ່ໃກ້ສະຖານນີລົດໄຟ ພາບທີ່ເຮົາສາມາດເຫັນໄດ້ເລື້ອຍໆກໍ່ຄື ຮ້ານຫຼິ້ນເກມນັ້ນຈະເຕັມໄປດ້ວຍພະນັກງານບໍລິສັດຫຼືນັກທຸລະກິດຫຼັງເລີກວຽກ.

ຕີກອບ　　ゴルフ　golf

ໃນການສັງສັນຂອງນັກທຸລະກິນັ້ນ ສິ່ງທີ່ຂາດເສຍບໍ່ໄດ້ອີກຢ່າງໜຶ່ງຄືການຫຼິ້ນກອບ ການຕິດຕໍ່ເຮັດທຸລະກິດລະຫວ່າງຊາວຍີ່ປຸ່ນດ້ວຍກັນຈະໃຫ້ຄວາມສຳຄັນຫຼາຍກັບການພົບປະສັງສັນກັນ ດັ່ງນັ້ນຈຶ່ງມັກມີການເຊີນແຂກທີ່ຕົນຕິດຕໍ່ທຸລະກິດດ້ວຍກັນໄປດື່ມເລື່ອຍໆໂດຍຮຽກການເຊື້ອເຊີນແຂກເຫຼົ່ານີ້ວ່າການຮັບຮອງແຂກ ນອກຈາກກ່ອນເຊີນແຂກໄປດື່ມເຫຼົ້າແລ້ວ ກໍ່ຈະມີການເຊີນແຂກໄປຫຼິ້ນກອບອີກດ້ວຍ ດັ່ງນັ້ນ ນັກທຸລະກິດຈຶ່ງມັກຝຶກຫັດຫຼິ້ນກອບໃຫ້ເປັນເອົາໄວ້ ເຖິງວ່າບາງຄົນຈະບໍ່ໄດ້ຫຼິ້ນກອບເປັນງານ ອາດິເລກຫຼືບໍ່ສົນໃຈຕໍ່ການຫຼິ້ນກອບກໍ່ຕາມ ທັ້ງນີ້ກໍ່ເພາະວ່ານັກທຸລະກິດເຫຼົ້ານີ້ມີຈຸດປະສົງກໍ່ຄືການສ້າງຄວາມສຳພັນຕະພາບລະຫວ່າງບຸກຄົນ ໂດຍຫວັງຜົນປະໂຫຍດນຳທາງດ້ານການງານແລະທຸລະກິດນັ້ນເອງ.

## ２３. ການເຈລະຈາທຸລະກິດແບບຍີ່ປຸ່ນ　日本的商談

ຫຼັກການໃຫ້ຄວາມຊື່ຖືແກ່ບຸກຄົນເປັນອັນດັບທີ່ໜຶ່ງ　信用第一主義(しんようだいいちしゅぎ)

ໃນປະເທດຢຸໂຣບແລະອາເມລິການັ້ນ ເຖິງຈະຮູ້ຈັກກັນໂດຍຜ່ານການເຮັດທຸລະກິດກໍ່ຕາມ ແຕ່ກໍ່ມີການຂີດເສັ້ນແບ່ງອອກລະຫ່ວາງການຕິດຕໍ່ກັນທາງດ້ານທຸລະກິດແລະການຕິດຕໍ່ສຳພັນກັນເປັນການສ່ວນຕົວຢ່າງຊັດເຈັນ ແຕ່ການເຈລະຈາທຸລະກິດແບບຍີ່ປຸ່ນແລ້ວ ບໍ່ມີການຂີດເສັ້ນແບງອອກໄປຢ່າງຊັດເຈັນ ຕົວຢ່າງກໍລະນີນັກທຸລະກິດຍີ່ປຸ່ນເຊີນແຂກຊຶ່ງເຮັດທຸລະກິດຮ່ວມກັນຢູ່ໄປດື່ມເຫຼົ້າຫຼືໄປທ່ຽວນັ້ນ ເຖິງແມ່ນວ່າຈະບໍ່ມີການສົນທະນາເລື່ອງທຸລະກິດແລະການງານກໍ່ຕາມການປະພຶດເຊັ່ນນັ້ນຖືວ່າເປັນຂັ້ນຕອນໜຶ່ງຂອງການດຳເນີນການເຈລະຈາທຸລະກິດຕ່າງກັບນັນທຸລະກິດຂອງຢຸໂຣບແລະອາເມລິກາຊຶ່ງຈະຖືເອົາຄວາມເຊື່ອຖືໃນການເຈລະຈາທຸລະກິດ ນັ້ນຂຶ້ນຢູ່ກັບການພິດຈາລະນາເນື້ອໃນແລະເງື່ອນໄຂຂອງສັນຍາ ລວມທັ້ງການລົງມືປະຕິບັດຕົວຈິງຕາມສັນຍາເປັນເລື່ອງສຳຄັນອັນດັບທຳອິດ ສ່ວນນັກທຸລະກິດຍີ່ປຸ່ນແລ້ວຈະຖືວ່າສິ່ງເຫຼົ້ານັ້ນເປັນເລື່ອງສຳຄັນອັນດັບ 2 ສິ່ງສຳຄັນອັນດັບທຳອິດໃນການຕິດຕໍ່ທຸລະກິດແບບຍີ່ປຸ່ນກໍ່ຄືບຸກຄົນທີ່ຕົນກຳລັງເຈລະຈາຕິດຕໍ່ເຮັດທຸລະກິດຢູ່ນັ້ນ ເປັນຄົນທີ່ໄວ້ເນື້ອເຊື່ອໃຈໄດ້ຫຼາຍນ້ອຍພຽງໃດເປັນຫຼັກ. ສ່ວນນັກທຸລະກິດຕ່າງຊາດທີ່ຈະເຮັດທຸລະກິດກັບຍີ່ປຸ່ນນັ້ນຈະຖືເອົາການພົບປະເຈລະຈາໂດຍກົງເປັນຈຸດສຳຄັນສຳລັບນັກທຸລະກິດຍີ່ປຸ່ນແລ້ວ ການນັດໝາຍພົບປະເຈລະຈາກັບຄູ່ຄ້າທີ່ເຮັດທຸລະກິດດ້ວຍກັນຫຼາຍໆຄັ້ງນັ້ນນອກຈາກເປັນການກະທຳເພື່ອຈຸດປະສົງໃນການເຈລະຈາເຮັດສັນຍາທາງທຸລະກິດແລ້ວຍັງຖືວ່າເປັນໂອກາດທີ່ເຮັດໃຫ້ຕົນເອງສາມາດສັງເກດພິຈະລະນາໄດ້ວ່າບຸກຄົນທີ່ຕົນກຳລັງຕິດຕໍ່ທຸລະກິດຢູ່ດ້ວຍນັ້ນມີຄວາມໜ້າເຊື່ອຖືພຽງໃດ.

ການກຳໜົດແລະຕັດສິນຕ້ອງໃຊ້ເວລາ　時間(じかん)のかがる合意(ごうい)

ທີ່ປະເທດຍີ່ປຸ່ນ ຊ່ວງໄລຍະເວລາຕັ້ງແຕ່ເລີ້ມເປີດເຈລະຈາທຸລະກິດຈົນເຖິງຂັ້ນຕອນການຕົກລົງເຮັດສັນຍານັ້ນເປັນຊ່ວງໄລຍະທີ່ກິນເວລາຫຼ້າຍ ເນື່ອງຈາກຊາວຍີ່ປຸ່ນມີລັກສະນະນິສັຍທີ່ຕ້ອງຂໍຄວາມເຫັນ

ຊອບແລະມັດຕິຢ່າງເປັນເອກະສັນຈາກຜູ້ກ່ຽວຂ້ອງທຸກຄົນຢ່າງເປັນທາງການກ່ອນ ຈິ່ງຈະສາມາດຕັດສິນໃຈຕົກລົງການເຮັດສັນຍາໄດ້.

ສາມາດກ່າວໄດ້ວ່າໃນການເຈລະຈາທຸລະກິດກັບນັກທຸລະກິດຊາວຍີ່ປຸ່ນນັ້ນ ຜູ້ເຈລະຈາຈະຕ້ອງກະເຮັດດ້ວຍຄວາມເປີດເຜີຍແລະຈິງໃຈ ການເລັ່ງລັດເອົາຄຳຕອບຕົກລົງຫຼືປະຕິເສດການເຮັດສັນຍາຊື້ຂາຍທາງທຸລະກິດນັ້ນກັບຈະສົ່ງຜົນໃນທາງລົບເຮັດໃຫ້ການເຈລະຈາບໍ່ປະສົບຄວາມສຳເລດແລະອາດເຮັດໃຫ້ຄວາມສຳພັນລະຫວ່າງບຸກຄົນເສຍໄປໄດ້ ອາດເວົ້າໄດ້ອີກວ່າເວລາທີ່ນັກທຸລະກິດຍີ່ປຸ່ນພິຈາລະນາເນື້ອຫາຂອງສັນຍາຊື້ຂາຍທາງທຸລະກິດນັ້ນບໍ່ມີພຽງແຕ່ການພິຈະລະນາທຳຄວາມເຂົ້າໃຈເນື້ອເລື່ອງທີ່ລະບຸໃນສັນຍາເທົ່ານັ້ນ ແຕ່ຍັງໝາຍຄວາມລວມເຖິງການໃຫ້ຄວາມສຳຄັນກັບການພິຈະລະນາເຖິງລັກສະນະນິສັຍແລະຄວາມສຳພັນລະຫວ່າງບຸກຄົນກັບຄູ່ສັນຍາດ້ວຍວ່າຈະສາມາດຕິດຕໍ່ເຮັດທຸລະກິດລ່ວມກັນຕໍ່ໄປອີດໃນໄລຍະຍາວໄດ້ຫຼືບໍ່.

<u>ການເຮັດທຸລະກິດໂນ້ມຫວັງເຮັດຄວາມສຳພັນແບບຄອບຄົວຫຼືແບບພີ່ນ້ອງ</u> ビジネス(びじねす)の家族的志向(かぞくてきしこう)

ໃນວົງການທຸລະກິດນັ້ນ ເຖິງວ່າການຕົກລົງເຮັດສັນຍາຈະເປັນເລື່ອງທຳມະດາກໍ່ຕາມແຕ່ສຳລັບການເຮັດທຸລະກິດແບບຍີ່ປຸ່ນແແລ້ວຈະບໍ່ມີການກຳໜົດລາຍລະອຽດກ່ຽວກັບການເຮັດທຸລະກິດຕັ້ງແຕ່ຕອນທຳອິດໂດຍເດັດຂາດ ມັກຈະປຶກສາແລະຂໍຄວາມເຫັນຊອບ ລວມທັ້ງມັດຕິເປັນເອກກະສັນຈາກບຸກຄົນທີ່ກ່ຽວຂ້ອງໂດຍສ່ວນໃຫ່ຍກ່ອນ ຈິ່ງຈະທຳການຕັດສິນໃຈໄດ້ ຊຶ່ງການຂໍຄວາມເຫັນຊອບຈາກຜູ້ອື່ນນັ້ນທີ່ຈິ່ງແລ້ວ ໝາຍເຖິງຄວາມຮູ້ສຶກປຽບເໝືອນເປັນຍາດຕິພີ່ນ້ອງຫຼືຄົນໃນຄອບຄົວດຽວກັນ ລ່ວມທັ້ງໃຫ້ຄວາມຊ່ວຍເຫຼືອຊຶ່ງກັນແລະກັນຍາມມີບັນຫາຫຼືເວລາທີ່ເດືອດຮ້ອນ ດັ່ງນັ້ນຫາກນັກທຸລະກິດຊາວຍີ່ປຸ່ນໄດ້ຕົກລົງຕັດສິນໃຈເຮັດສັນຍາຊື້ຂາຍທາງທຸລະກິດແລ້ວນັ້ນກໍ່ໝາຍຄວາມວ່າຄວາມສຳພັນລະຫວ່າງບຸກຄົນໄດ້ເລີ້ມແລະຈະດຳລົງຕໍ່ໄປອີກຍາວນານ ດ້ວຍສະພາບການເຊັ່ນນີ້ເປັນສາເຫດໜຶ່ງທີ່ເຮັດໃຫ້ບໍລິສັດຕ່າງຊາດທີ່ບໍ່ມີຄວາມເຂົ້າໃຈເລື່ອງນີ້ປະສົບຄວາມລຳບາກໃນການດຳເນີນທຸລະກິດກັບນັກທຸລະກິດຍີ່ປຸ່ນ.

## ２４．ຫຼັກສະນະພິເສດຂອງການຈ້າງງານແບບຍີ່ປຸ່ນ　雇用関係の特徴

<u>ລະບົບການຈ້າງຕະລອດຊີວິດແລະຄວາມຈົງຮັກພັກດີຕໍ່ບໍລິສັດ</u>

ເມື່ອຄົນໆໜຶ່ງຖືກຈ້າງເຂົ້າເປັນພະນັກງານຂອງບໍລິສັດແລ້ວ ຫາກປະຕິບັດຕາມຄຳສັ່ງຂອງຫົວໜ້າພ້ອມທັ້ງຮັກສາສຳພັນຕະພາບດີກັບຜູ້ຮ່ວມງານ ແລະເຮັດການໂດຍບໍ່ມີບັນຫາເກີດຂຶ້ນ ເຖິງວ່າຈະບໍ່ໄດ້ສ້າງຜົນງານອັນໃດທີ່ໂດດເດ່ນເປັນພິເສດກໍ່ຕາມ ກໍ່ຈະບໍ່ຖືກເລີກຈ້າງຕາບໃດທີ່ບໍລິສັດບໍ່ລົ້ມລະລາຍ ອີກຢ່າງໜຶ່ງນອກຈາດຈະໄດ້ຮັບຄ່າຈ້າງຕ່າງໆ ເພີ້ມເຕີມແລ້ວ ກໍ່ຍັງຈະໄດ້ຮັບການປະກັນທັ້ງໃນດ້ານສະຖານນະພາບທາງສັງຄົມແລະການດຳເນີນຊີວິດອີກດ້ວຍ ກໍ່ຄື ບໍລິສັດຈະໂອບອຸ້ມຊີວິດຂອງພະນັກງານໄປຈົນກ່ວາຈະກະສຽນອາຍຸ ຊຶ່ງນອກຈາກຈະມີເງິນເດືອນແລະເບັຍລ້ຽງຕ່າງໆເພີ່ມເຕີມແລ້ວ ກໍ່ຈະຈັດຫາທີ່ຢູ່ອາໃສ່ ຢ່າງເຊັ່ນບ້ານພັກຂອງບໍລິສັດ ຫໍພັກສຳລັບຄົນໂສດ ຕະລອດເຖິງການຈັດຕຽມສິ່ງອຳນວຍຄວາມສະນວກແລະສ້າງສະຫວັດດີການຕ່າງໆ ຢ່າງຄົບຖ້ວນ ຖ້າເປັນບໍລິສັດຂະນາດໃຫ່ຍເທົ່າໃດ ຜົນປະໂຫຍດເຫຼົ່ານີ້ກໍ່ຈະຫຼາຍເພີ່ມຂື້ນ. ການທີ່ບໍລິສັດຮັບປະກັນທີ່ອຸບປະຖຳການດຳເນີນຊີວິດຂອງພະນັກງານຕັ້ງແຕ່ເລີ້ມເຂົ້າເຮັດວຽກຈົນເຖິງກະສຽນອາຍຸ ເຮັດໃຫ້ພະນັກງານສາມາດເຮັດວຽກໄດ້ໂດຍປັດສະຈາກຄວາມກັງວົນໃຈ ຫາກກ່າວອີກແງ່ໜຶ່ງກໍ່ຄືບໍລິສັດແລະພະນັກງານເປັນຜູ້ຮ່ວມສະຕາກຳດຽວກັນ ກໍ່ຄື ການທີ່ບໍລິສັດດຳລົງຄົງຕົວຢູ່ແລະຈະ

ເລີນກ່າວໜ້າຂື້ນກໍ່ເປັນການເຮັດໃຫ້ຕົວພະນັກງານເອງມີຫຼັກປະກັນຊີວິດທີ່ມັ່ນຄົງແລະສົມບູນພູນສຸກຫຼາຍຂື້ນນັ້ນເອງ ສະນັ້ນ ຈື່ງເປັນເລື້ອງທຳມະດາທີ່ອັດຕາຂອງ ຜູ້ທີ່ເຮັດວຽກໃຫ້ກັບບໍລິສັດດຽວໄປຕະລອດຈື່ງມີອັດຕາສູງແລະມີຄວາມຈົງຮັກພັກດີຕໍ່ບໍລິສັດຢ່າງໜຽວແນ່ນ ທຳນຽມປະຕິບັດໃນການຈ້າງງານເຊັ່ນນີ້ ໄດ້ຊ່ວຍບໍ່ໃຫ້ເກີດບັນຫາວ່າງງານເປັນຈຳນວນຫຼາຍ ຈາກພາວະເສດຖະກິດຕົກຕໍ່າໃນຊ່ວງປີ 1990ເປັນຕົ້ນມາກໍ່ມີການປ່ຽນແປງເກີດຂື້ນໃນລັກສະນະການຈ້າງງານໃຫ້ຫຼາກຫຼາຍຂື້ນເຊັ່ນໃນຮູບແບບຂອງສັນຍາຈ້າງແລະການຮັບຈ້າງແຮງງານຊົ່ວຄາວຕາມພາວະຂອງກິດຈະການໂດຍນຳໃຊ້ວິທີຈ້າງແຮງງານຈາກບໍລິສັດຈັດສົ່ງແຮງງານເປັນຕົ້ນ.

<u>ການຮັບພະນັກງານໃໝ່ແລະການດູແລບຸກຄະລາກອນ</u>

ໂດຍທົ່ວໄປແລ້ວບໍລິສັດຈະຮັບພະນັກງານໃໝ່ປີລະ 1 ຄັ້ງ ໃນລະດູການຈ້າງງານປົກະຕິ ຈາກບັນດາຜູ້ຮຽນຈົບການສຶກສາໃໝ່ ຈຳນວນຄົນທີ່ຈະຮັບໃໝ່ຈະປ່ຽນໄປທຸກປີຂື້ນຢູ່ກັບຜົນການດຳເນີນງານຂອງບໍລິສັດ ແຕ່ກໍ່ຈະມີການວາງແຜນຮັບພະນັກງານໃໝ່ເປັນປະຈຳຕາມຈຳນວນທີ່ກຳນົດໄວ້ໂດຍຄຳນຶງເຖິງຄວາມສົມດຸນຂອງໂຄງສ້າງທາງອາຍຸໂດຍລວມຂອງອົງກອນດ້ວຍ. ໃນການຮັບພະນັກງານໃໝ່ບໍລິສັດຈະບໍ່ປະກາດຮັບສະມັກແຍກຕາມຕໍ່າແໜ່ງ ແຕ່ຈະຮັບເຂົ້າມາລວມກັນຄັ້ງດຽວ ສ່ວນມາດຖານໃນການຮັບພະນັກນັກງານນັ້ນ ຈະໃຫ້ຄວາມສຳຄັນກັບບຸກຄະລິລັກສະນະແລະປະວັດການສຶກສາ ຢ່າງເຊັ່ນ ສະຖານສຶກສາເປັນຫຼັກ ຫຼັງຈາກເຂົ້າເຮັດວຽກໃນບໍລິສັດແລ້ວ ກໍ່ຈະມີການຈັດຝຶກອົບລົມເປັນໄລຍະໆ ເພື່ອໃຫ້ມີຄວາມຮູ້ຄວາມສາມາດຕາມທີ່ບໍລິສັດຕ້ອງການພ້ອມກັນກັບຈັດໃຫ້ມີການສັບປ່ຽນໝູນວຽນວຽກງານທຸກໆ 2-3 ປີ ເພື່ອໃຫ້ພະນັກງານມີປະສົບການຫຼາຍໆດ້ານ ແລະນຳເອົາຄວາມຮູ້ຄວາມສາມາດທີ່ສະສົມມານັ້ນໄປໃຊ້ປະໂຫຍດໃນໄລຍະຍາວຈົນກວ່າຈະກະສຽນອາຍຸ.

<u>ພະນັກງານເພດຍິງແລະການແບ່ງແຍກທາງເພດ</u>

ໂດຍທົ່ວໄປແລ້ວ ພະນັກງານເພດຍິງຈະຖືກແບງແຍກອອກຈາກພະນັກງານເພດຊາຍ ວຽກສ່ວນໃຫ່ຍແມ່ນຢູ່ໃນລັກສະນະເປັນຜູ້ຊ່ວຍເສີມງານຂອງເພດຊາຍ ໃນໄລຍະຫຼັງໄດ້ມີສຽງວິພາກວິຈານວ່າເປັນການແບ່ງແຍກທາງເພດແລະມີການເຄື່ອນໄຫວໃຫ້ແກ່ໄຂຫຼາຍຂື້ນ ໃນເດືອນເມສາ ປີ1986ໄດ້ມີການປະກາດໃຊ້ກົດໝາຍວ່າດ້ວຍຄວາມສະເມີພາບໃນໂອກາດການການຈ້າງງານລະວ່າງຍິງແລະຊາຍ ໃນຄວາມເປັນຈິງ ກໍ່ຍັງມີເພດຍິງຈຳນວນຫຼາຍທີ່ລາອອກຈາກການຫຼັງຈາກເຮັດການໄດ້ພຽງບໍ່ຫຼາຍປີ ແຕ່ກໍ່ມີຈຳນວນໜຶ່ງທີ່ເລືອກເອົາທີ່ຈະເຮັດວຽກເປັນຜູ້ສຳນານຕໍ່ວຽກການໃດໜຶ່ງກໍ່ມີຫຼາຍເພີ່ມຂື້ນ